ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
**********************

0262

ກອງເລຂາ ຄະນະກຳມະການ ປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ເລກທີ............ກຄປ.ກທລ
ນະຄອນຫຼວງວຽງຈັນ, ວັນທີ 05 AUG 2016

# ບົດລາຍງານການລົງຕິດຕາມວຽກງານ
# ຢູ່ແຂວງຫຼວງນ້ຳທາ, ວັນທີ 27 ມິຖຸນາ - 1 ກໍລະກົດ 2016

**ຈຸດປະສົງ**:
ເພື່ອລົງໄປຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດໂຄງການ ກອງທຶນໂລກ ຕ້ານເອດ ວັນນະໂລກ ແລະ ໄຂ້ຍຸງ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນສຸກສາລາ ຕາມແຜນການທີ່ໄດ້ວາງໄວ້ ໂດຍເໜັ້ນໜັກໃສ່ວຽກງານຫຼາຍດ້ານເຊັ່ນ: ການເງິນ, ການຈັດຊື້, ການຈັດຕັ້ງປະຕິບັດ, ການລາຍງານ ແລະ ການຕີລາຄາປະເມີນຜົນລວມ. ເພື່ອເຮັດໃຫ້ໂຄງການຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ທີ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນໂລກ ໄດ້ປະຕິບັດຖືກຕ້ອງ ແລະ ປະສົບຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້.

**ສະຖານທີ່ລົງປະຕິບັດວຽກງານໃນຄັ້ງນີ້:**

- ວັນທີ 28/06/2016: - ໂຮງໝໍແຂວງ ແລະ ພະແນກສາທາລະນະສຸກແຂວງ
  - ຫ້ອງການສາທາລະນະສຸກເມືອງນ້ຳທາ
  - ສຸກສາລາຈະເລີນສຸກ
- ວັນທີ 29/06/2016: - ຫ້ອງການສາທາລະນະສຸກເມືອງສິງ
  - ສຸກສາລານ້ຳດ້າຍ
  - ສຸກສາລາພູດອນທັນ
- ວັນທີ 30/03/2016: - ສູນປິ່ນປົວພະຍາດເອດ ແລະ ວັນນະໂລກ ທີ່ໂຮງໝໍແຂວງ
  - ສະຖານີໄຂ້ຍຸງ
  - ສຸກສາລານາເຕີຍ

**ສັງລວມຜົນໄດ້ຮັບ**
ທີມງານໄດ້ຮ່ວມປຶກສາຫາລືກັບ ພະແນກສາທາລະນະສຸກແຂວງ, ເມືອງ ແລະ ສຸກສາລາ ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຕົວຈິງຂອງໂຄງການຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ພາຍໃນແຂວງ ຊຶ່ງໄດ້ຮັບການຊ່ວຍເຫຼືອ ຈາກກອງທຶນໂລກ ເພື່ອຖອດຖອນບົດຮຽນຈຸດດີ, ຈຸດອ່ອນ ແລະ ປັບປຸງແກ້ໄຂບັນຫາຂໍ້ຄົງຄ້າງ, ຊຶ່ງສາມາດສະຫຼຸບສັງລວມສິ່ງທີ່ພົບເຫັນທັງໝົດ ທີ່ພົວພັນເຖິງການຈັດຕັ້ງວຽກງານໂຄງການຂອງສາມພະຍາດ ພ້ອມດ້ວຍຂໍ້ສະເໜີແນະນຳເພື່ອປັບປຸງແກ້ໄຂບັນຫາດັ່ງນີ້:

# ໂຄງການເອດ

## 1. ໂຮງໝໍແຂວງ ແລະ ພະແນກສາທາລະນະສຸກແຂວງ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **<u>ຜົນສຳເລັດ:</u>**<br>ສຳລັບກິດຈະກຳຂອງກອງທຶນໂລກຕ້ານເອດສົກປີ 2014-2015 ໄດ້ຮັບເງິນ 20,560$ ແລະ ໄດ້ຈັດສັນໃຫ້: PCCA 6,156$ ສູນ ARV: 14,404$ ໄດ້ຈັດຕັ້ງປະຕິບັດແລ້ວ 9,304.13$<br>1. ກອງປະຊຸມປະຈຳໄຕມາດ 4 ຄັ້ງ/ປີ (ປະຕິບັດແລ້ວ 4 ຄັ້ງ)<br>2. ລົງຕິດຕາມການປະຕິບັກິດຈະກຳຂອງຂັ້ນເມືອງ 2 ຄັ້ງ/ປີ(ປະຕິບັດແລ້ວ 2 ຄັ້ງ)<br>3. ບໍ່ມີການຈັດຊື້<br>4. ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້<br>5. ການສົ່ງບົດລາຍງານໄດ້ສົ່ງຕາມປົກກະຕິ<br>6. ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ<br>7. ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ<br><br>**ມີບັນດາອົງການທີ່ໃຫ້ການຊ່ວຍເຫຼືອວຽກງານຕ້ານເອດຢູ່ພາຍໃນແຂວງມີຄື:**<br>1. ໂຄງການກອງທຶນໂລກຕ້ານເອດ/ພຕພ ເລີ້ມແຕ່ປີ 2003-ປະຈຸບັນປະກອບມີ 5 ເມືອງເປົ້າໝາຍຂອງໂຄງການ<br>2. ອົງການກາແດງ ເລີ້ມແຕ່ປີ 2015 – 2017 ປະກອບມີ 4 ເມືອງເປົ້າໝາຍຂອງໂຄງການ<br>3. ທະນາຄານພັດທະນາອາຊີ (ADB) ເລີ້ມແຕ່ປີ 2013 - ປະຈຸບັນປະກອບມີ 5 ເມືອງເປົ້າໝາຍວຽກງານຕ້ານເອດຮ່ວມມືຊາຍແດນລາວ-ຈີນ<br><br>**ສັງລວມກິດຈະກຳທີ່ໄດ້ປະຕິບັດສຳເລັດປີ (2014-2015)**<br>1. PCCA: ມີ 5 ກິດຈະກຳ,ສຳເລັດ 5<br>2. ສູນARV:ມີ 10 ກິດຈະກຳ, ສຳເລັດ 10<br>3. ງົບປະມານສ່ວນໃຫ່ຍແມ່ນສະໜັບສະໜູນພະນັກງານເບິ່ງແຍງດູແລກ ແລະ ປິ່ນປົວຜູ້ຕິດເຊື້ອ.<br>4. ພະນັກງານທີ່ຮັບຜິດຊອບວຽກງານຕ້ານເອດ/ພຕພ ແຕ່ລະເມືອງແມ່ນເຮັດໜ້າທີຕາມພາລະບົດບາດທີ່ຂັ້ນເທິ່ງໄດ້ມອບໝາຍໃຫ້ຈົນສຳເລັດ ເຊັ່ນໃນການລາຍງານຂໍ້ມູນປະຈຳເດືອນໄດ້ເປັນປົກກະຕິ.<br>5. ອຳນາດການປົກຄອງທ້ອງຖິ່ນໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ.<br><br>**ສັງລວມກິດຈະກຳທີ່ໄດ້ປະຕິບັດສຳເລັດປີ (2015-2016)**<br>• ງົບປະມານທັງໝົດ: 17,919USD<br>• ປະຕິບັດແລ້ວ 2 ໄຕມາດ: 8,959USD<br>- ບໍລິຫານຫ້ອງການ(ຄ່ານໍ້າ,ໄຟຟ້າ,ໂທລະສັບ)ກອງເລຂາ ແລະໂຮງໝໍແຂວງ<br>- ສະໜັບສະໜູນພະນັກງານຄັງເງິນ,ບັນຊີສາງ,ນາຍສາງ,<br>- ບໍລິຫານຫ້ອງການ ARV ໂຮງໝໍແຂວງ<br>- ສະໜັບສະໜູນຫົວໜ້າພະແນກ ແລະ ຜູ້ອຳນວຍການໂຮງໝໍແຂວງ.<br>- ສະໜັບສະໜູນຜູ້ປະສານງານ,ທ່ານໝໍພະຍາບານ,ການຢາ,ວິເຄາະ<br>- ຄ່າກວດວິເຄາະ<br>- ຄ່າເດີນທາງມາຕິດຕາມສຸຂະພາບ,ຮັບຢາຂອງຜູ້ຕິດເຊື້ອ/ເປັນພະຍາດເອດ |

**ຂໍ້ຫຍຸ້ງຍາກ:**

1. ການຂື້ນແຜນງົບປະມານປະຕິບັດກິດຈະກຳຈາກໂຮງໝໍໃຫ້ສູນກາງບາງຄັ້ງຊັກຊ້າ, ເຮັດໃຫ້ການຈັດຕັ້ງປະຕິບັດບໍ່ໄປຕາມແຜນທີ່ວາງໄວ້
2. ຄະນະກຳມະການຕ້ານເອດແຕ່ລະຂັ້ນບໍ່ໄດ້ເຄື່ອນໄຫວຕາມພາລະບົດບາດຍ້ອນບໍ່ມີງົບປະມານ.
3. ຈຳນວນຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງທີ່ມີສາວບໍລິການປະຈຳຢູ່ເພີ່ມຂື້ນ, ແຕ່ບໍ່ມີກິດຈະກຳເຂົ້າຫາກຸ່ມດັ່ງກ່າວ.
4. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈຳກັດ.
5. ກິດຈະກຳຂະແໜງເອດ ສາມາດຂະຫຍາຍຮອດແຕ່ຂັ້ນເມືອງເທົ່ານັ້ນ, ຍັງບໍ່ທັນໄດ້ຂະຫຍາຍຮອດຂັ້ນສຸກສາລາເທື່ອ
6. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈຳກັດ ແລະ ບໍ່ໄດ້ເຂົ້າເຖິງເຂດຫ່າງໄກ
7. ບາງເມືອງຍັງບໍ່ມີກິດຈະກຳກວມຮອດ ຫຼື ລົງຕິດຕາມຊຸກຍູ້ຂັ້ນເມືອງເຮັດໃຫ້ການປະຕິບັດວຽກງານຍຸ້ງຍາກໂດຍສະເພາະແມ່ນເມືອງນາແລ
8. ພະນັກງານທີຮັບຜິດຊອບວຽກງານຕ້ານເອດ ແລະ ພຕພ ຂັ້ນແຂວງ, ຂັ້ນເມືອງ ຍັງບໍ່ທັນມີປະສົບການ ເພາະວ່າມີການຊັບປ່ຽນຄົນໃໝ່ມາຮັບຜິດຊອບໂດຍບໍ່ໄດ້ຜ່ານການຝຶກອົບຮົມເລີຍ.

**ຂໍ້ແນະນຳ:**

1. ສ້າງແຜນງົບປະມານເພື່ອຂໍທຶນບ້ອງແຊກຄຸມສິ່ງເສີມເຂົ້າໃນວຽກງານເອດ
2. ຄວນມີການສະໜອງງົບປະມານບໍລິຫານໂຄງການໃຫ້ແກ່ຕາໜ່າງຂັ້ນເມືອງ ແລະ ສຸກສາລາ.
3. ເພີ່ມທະວີການຕິດຕາມຄົນເຈັບບໍ່ໃຫ້ຫາຍຕົວໃນໄລຍະປີ່ນປົວ ໃຫ້ມີໜ້າຕາມການນັດໝາຍ
4. ອອກແຮງເຮັດວຽກງານການໃຫ້ຄຳປຶກສາ
5. ອອກແຮງໃນການເຮັດວຽກງານສຸຂະສຶກສານຳກຸ່ມທີ່ສ່ຽງ ແລະ ແຈກຢາຍຖົງຢາງອານະໄມ
6. ເພີ່ມທະວີການບໍລິການການປີ່ນປົວ ພະຍາດຕິດຕໍ່ທາງເພດສຳພັນ
7. ຮັບປະກັນການສົ່ງບົດລາຍງານໃຫ້ທັນເວລາແລະຄົບຖ້ວນຕາມທີ່ໄດ້ກຳນົດໄວ້
8. ເອົາໃຈໃສ່ການເກັບຮັກສາສຳເນົາເອກະສານການລາຍງານໃນແຕ່ລະຂັ້ນ
9. ເອົາໃຈໃສ່ໃນການຮ່ວມມືກັບບັນດາອົງການຈັດຕັ້ງຫຼືຄູ່ຮ່ວມງານອື່ນທີ່ມີສ່ວນຮ່ວມໃນການເຄື່ອນໄຫວວຽກງານການຄວບຄຸມພະຍາດ.
10. ໃຫ້ເຄື່ອນໄຫວວຽກງານກິດຈະກຳຮ່ວມ TB ກັບ HIV

**ຂໍ້ສະເໜີ:**

**1. ຂັ້ນແຂວງ**

1.1 ປີຕໍ່ໄປ,ໃຫ້ສູນກາງໂອນເງິນໃຫ້ແຂວງປະຕິບັດກິດຈະກຳໄວກ່ວາເກົ່າ ແລະ ປົກກະຕິເພື່ອໃຫ້ການຈັດຕັ້ງປະຕິບັດກິດຈະກຳໄດ້ເລີ່ມແຕ່ຕົ້ນປີ.

1.2 ໃຫ້ມີກິດຈະກຳເຂົ້າຫາສາວບໍລິການທີ່ຢູ່ແຕ່ລະຈຸດ (ຮ້ານອາຫານ,ກິນດື່ມ,ບັນເທີງ,ເຮືອນພັກ ແລະຮ້ານອົບນວດ).

1.3 ໃຫ້ມີກອງປະຊຸມປະຈຳໄຕມາດ 4 ຄັ້ງ/ປີ (ຫຼື 2 ຄັ້ງຕໍ່ປີ)

1.4 ໃຫ້ລົງຕິດຕາມການປະຕິບັດກິດຈະກຳຂອງຂັ້ນເມືອງ2ຄັ້ງ/ປີ

1.5 ງົບປະມານໃຫ້ທັນກັບເວລາ ແລະ ແຜນງານທີ່ວາງໄວ້ປະຈຳແຕ່ລະໄຕຣມາດ.

1.6 ເພີ່ມເງິນເບ້ຍລ້ຽງ ແລະ ເງິນຈູງໃຈໃຫ້ແກ່ພະນັກງານແຕ່ຂັ້ນແຂວງຮອດຂັ້ນທ້ອງຖິ່ນ

**2. ສູນກາງ/ທິມງານ:**

**ບັນດາກິດຈະກຳຫຼັກທີ່ຕ້ອງໄດ້ຈັດຕັ້ງປະຕິບັດ:**

2.1 ວຽກງານການໃຫ້ຄຳປຶກສາແກ່ປະຊາກອນທົ່ວໄປ

2.2 ວຽກງານການໃຫ້ຄຳປຶກສາແກ່ແມ່ມານທີ່ມາຝາກທ້ອງ

| |
|---|
| 2.3 ວຽກງານການໃຫ້ຄຳປຶກສາແກ່ກຸ່ມເປົ້າໝາຍ FSW & MSM<br>2.4 ແຈກຢາຍຖົງຢາງອານະໄມຟຼີ<br>2.5 ການປິ່ນປົວພະຍາດຕິດຕໍ່ທາງເພດສຳພັນ<br>2.6 ສູນປິ່ນປົວພະຍາດເອດ<br>2.7 ເຜີຍແຜ່ສຸຂະສຶກສາກ່ຽວກັບພະຍາດ HIV-AIDS ອາສາສະມັກເພື່ອນຊ່ວຍເພື່ອນ<br>2.8 ການຮອມກຸ່ມຜູ້ຕິດເຊື້ອ<br>2.9 ງົບບໍລິຫານຫ້ອງການ |

## 3 ຫ້ອງການສາທາລະນະສຸກເມືອງນ້ຳທາ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **<u>ຜົນສຳເລັດ:</u>**<br>1. ກອງທຶນໂລກຢຸດຕິການຊ່ວຍເຫຼືອແຕ່ 30/12/2015<br>2. ພຽງແຕ່ບໍລິການໃຫ້ຄຳປຶກສາທົ່ວໄປ<br>3. ໄດ້ຮັບເງິນຊ່ວຍຈາກພາກສ່ວນອື່ນ<br>4. ໄດ້ຮັບອຸປະກອນການແພດ, ຢາ ແລະ ເຈ້ຍຈຸ່ມ |
| **<u>ຂໍ້ຫຍຸ້ງຍາກ:</u>**<br>1. ການຕິດຕໍ່ປະສານງານລະຫວ່າງຫ້ອງການສາທາລະນະສຸກເມືອງ ແລະ ແຂວງ ຍັງບໍ່ສະດວກ ແລະ ຕໍ່ເນື່ອງ<br>2. ງົບປະມານຊັກຊ້າ ແລະ ບໍ່ມີເງິນລົງຕິດຕາມສຸກສາລາ ແລະ ບ້ານ<br>3. ບໍລິການໃຫ້ຄຳປຶກສາ (ບໍ່ມີສູນປິ່ນປົວ)<br>4. ບໍ່ໄດ້ເຮັດພາລະບົດບາດຂອງໂຮງໝໍ<br>5. ບໍ່ມີການອົບຮົມ<br>6. ບໍ່ໄດ້ເຄື່ອນໄຫວກິດຈະກຳ ແລະ ຕິດຕາມຊຸກຍູ້ຂັ້ນເມືອງເຮັດໃຫ້ການປະຕິບັດວຽກງານຍຸ້ງຍາກ<br>7. ບໍ່ມີການຈັດຊື້ ອຸປະກອນການແພດ ແລະ ຢາແມ່ນທາງສູນກາງ ແລະ ແຂວງເປັນຜູ້ສະໜອງໃຫ້ |
| **<u>ຂໍ້ແນະນຳ:</u>** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສິ່ງເສີມທີ່ມີຢູ່ແລ້ວ |
| **<u>ຂໍ້ສະເໜີ:</u>** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ ເພື່ອຈະຂະຫຍາຍກິດຈະກຳໄປເຂດຫ່າງໄກສອກຫຼີກ |

## 4 ສຸກສາລາຈະເລີນສຸກ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **<u>ຜົນສຳເລັດ:</u>**<br>1. ໄດ້ໃຊ້ເງິນສົ່ງເສີມບໍລິ ຫານ 1 ລ້ານປາຍກີບ<br>2. ໄດ້ຮັບອຸປະກອນການແພດ, ຢາ ແລະ ເຈ້ຍຈຸ່ມ |
| **<u>ຂໍ້ຫຍຸ້ງຍາກ:</u>**<br>1. ບໍ່ມີງົບປະມານເຄື່ອນໄຫວກິດຈະກຳ<br>2. ບໍ່ມີການຈັດຊື້; ອຸປະກອນການແພດ ແລະ ຢາແມ່ນຂັ້ນ ເມືອງຈັດສົ່ງໃຫ້<br>3. ປີ 2016 ຍັງບໍ່ທັນໄດ້ຮັບເຈ້ຍຈຸ່ມ<br>4. ຫຍຸ້ງຍາກໃນການສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸ ແລະ ອາຄາ<br>5. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈຳກັດ ແລະ ບໍ່ພຽງພໍ |

| | |
|---|---|
| **ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສິ່ງເສີມທີ່ມີຢູ່ແລ້ວ | |
| **ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ | |

## 5 ຫ້ອງການສາທາລະນະສຸກເມືອງສິງ

| **ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ** |
|---|
| **ຜົນສຳເລັດ:**<br>1. ການບໍລິການສ່ວນຫຼາຍແມ່ນຄົນເຈັບມາຈາກເມືອງລອງ<br>2. ເຈ້ຍຈຸ່ມສ່ວນຫຼາຍມອບໃຫ້ໂຮງໝໍນຳໃຊ້<br>3. ບໍ່ມີຄົນເຈັບ |
| **ຂໍ້ຫຍຸ້ງຍາກ:**<br>1. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງບໍ່ພຽງພໍ<br>2. ບໍ່ມີການຈັດຊື້ |
| **ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສິ່ງເສີມທີ່ມີຢູ່ແລ້ວ |
| **ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ |

## 6 ສຸກສາລານ້ຳດ້າຍ

| **ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ** |
|---|
| **ຜົນສຳເລັດ:**<br>1. ກອງທຶນໝູນວຽນມີ 40 ປາຍລ້ານກ່ວາກີບຝາກໄວ້ທະນາຄານ<br>2. ມີເງິນແຮສຸກເສີນ 1-2 ລ້ານກີບ<br>3. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງບໍ່ພຽງພໍ |
| **ຂໍ້ຫຍຸ້ງຍາກ:**<br>1. ບໍ່ມີງົບປະມານເຄື່ອນໄຫວກິດຈະກຳ<br>2. ບໍ່ມີການຈັດຊື້<br>3. ບໍ່ມີງົບປະມານຢ້ຽມຢາມບ້ານ (ເມືອງລົງຢ້ຽມຢາມເອງ)<br>4. ເວລາໄປເກັບຂໍ້ມູນແມ່ນອາໄສໃນເວລາໄປວຽກອື່ນ<br>5. ບໍ່ໄດ້ລາຍງານໃຫ້ເມືອງປົກກະຕິຫຍຸ້ງຍາກໃນການສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸ ແລະ ອາຄາ<br>6. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງບໍ່ພຽງພໍ |
| **ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສິ່ງເສີມທີ່ມີຢູ່ແລ້ວ |
| **ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ |

## 7 ສຸກສາລາພູດອນທັນ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **<u>ຜົນສຳເລັດ:</u>**<br>1. ມີເງິນໝູນວຽນ 16 ລ້ານປາຍກ່ວາກີບ ຝາກໄວ້ທະນາຄານ<br>2. ເງິນແຮສຸກເສີນ 2-3 ລ້ານກີບ<br>3. ບໍ່ມີຄົນເຈັບ<br>4. ງົບປະມານລົງເຄື່ອນໄຫວວຽກງານສຸຂະສຶກສາແມ່ນໃຊ້ບ້ອງເງິນບໍລິຫານ ແລະ ເງິນສົ່ງເສີມ |
| **<u>ຂໍ້ຫຍຸ້ງຍາກ:</u>**<br>1. ບໍ່ມີງົບປະມານເຄື່ອນໄຫວກິດຈະກຳ<br>2. ບໍ່ມີການຈັດຊື້ |
| **<u>ຂໍ້ແນະນຳ:</u>** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ |
| **<u>ຂໍ້ສະເໜີ:</u>** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ |

## 8 ສູນປິ່ນປົວພະຍາດເອດ ທີ່ໂຮງໝໍແຂວງ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **<u>ຜົນສຳເລັດ:</u>**<br>1. ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້<br>2. ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ<br>3. ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ<br>4. ໄດ້ກວດຄົນເຈັບທຸກມື້, ຄົນເຈັບສ່ວນຫຼາຍໄດ້ເຂົ້າເຖິງການປິ່ນປົວ ແລະ ໄດ້ແນະນຳວິທີການໃຊ້ຊີວິດຢູ່ຮ່ວມກັນ<br>5. ໄດ້ມີການປະສານງານ ຮ່ວມກັບບັນດາແຂວງອ້ອມຂ້າງ ຄົນເຈັບສາມາດມາຕໍ່ຢາກິນຢູ່ສູນ<br>6. ໄດ້ຮັບການຊ່ວຍເຫຼືອຈາກ ADB ແລະ CDC |
| **<u>ຂໍ້ຫຍຸ້ງຍາກ:</u>**<br>1. ເຄື່ອງກວດມີ 1 ເຄື່ອງບໍ່ພຽງພໍ<br>2. ບໍ່ມີບຸກຄະລາກອນວິເຄາະປະຈຳ<br>3. ຂາດນ້ຳຢາກວດ ມີແຕ່ເຄື່ອງກວດທີ່ໄດ້ຮັບການສະໜັບສະໜູນຈາກ ສປປ ຈີນ<br>4. ຫ້ອງມ້ຽນເຄື່ອງ Gen-Expert ບໍ່ໄດ້ມາດຕະຖານ ເພາະວ່າມີການເກັບມ້ຽນເຄື່ອງກວດຫຼາຍຊະນິດ ແລະ ບໍ່ສະອາດ<br>5. ໄດ້ຮັບເງິນທຸກໆທ້າຍໄຕມາດ ເປັນສາເຫດບໍ່ສະດວກໃນການປະຕິບັດວຽກງານ<br>6. ໄດ້ຕິດໜີ້ໂຮງໝໍ ຄ່າການບໍລິການຄົນເຈັບທຸກໆໄຕມາດເກືອບ 6,000,000 ກີບ<br>7. ບາງຄັ້ງຜູ້ຮັບຜິດຊອບການເງິນແມ່ນໄດ້ເອົາເງິນສ່ວນຕົວຈ່າຍກ່ອນ<br>8. ບໍ່ມີຫ້ອງສະເພາະໃຫ້ຄຳປຶກສາແກ່ຄົນເຈັບ<br>9. ຫ້ອງເກັບມ້ຽນຢາ ບໍ່ມີແອ ເຊິ່ງຈະເປັສາເຫດໃຫ້ຢາເຊື່ອມຄຸນນະພາບໄວ<br>10. ບໍ່ມີງົບປະມານເຄື່ອນໄຫວກິດຈະກຳເຂົ້າຫາກຸ່ມເປົ້າໝາຍ FSW, MSM ແລະ ປະຊາກອນເຄື່ອນຍ້າຍ |

**ຂໍ້ແນະນຳ:**

1. ຖ້າມີການນຳໃຊ້ເງິນຮ່ອງອື່ນໆກ່ອນ ແມ່ນໃຫ້ມີເອກະສານຢັ້ງຢືນດ້ານການເງິນ ເພື່ອເປັນບ່ອນອ້າງອີງໃນການໄຊ້ແທນຄືນ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອ

1. ເພື່ອປູພື້ນທາງຍ່າງລະຫວ່າງຕຶກຕໍ່ຕຶກ
2. ເພື່ອສ້າງເຮືອນຄົວຄົນເຈັບ
3. ເພື່ອຊື້ແອຕິດຕັ້ງ ຫ້ອງສາງເກັບມ້ຽນຢາ
4. ເພື່ອຕິດແຫວ່ນແກ້ວໃສ່ຝາ ຫ້ອງຕ້ອນຮັບຄົນເຈັບ
5. ເພື່ອຊື້ກົງເຕີນ້ຳ ແລະ ໄຟຟ້າຕ່າງຫາກ ເພາະດຽວນີ້ແມ່ນຊົມໃຊ້ຮ່ວມກັບຂອງໂຮງໝໍ
6. ເພື່ອສ້າງກັນສາດດ້ານໜ້າຂອງຕຶກ ARV
7. ເພື່ອສ້າງຫ້ອງສະເພາະບໍລິການໃຫ້ຄຳປຶກສາແກ່ຄົນເຈັບ
8. ເພື່ອຂະຫຍາຍສູນ ARV ໄປເມືອງນາແລ

## 7. ສຸກສາລານາເຕີຍ

**ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສຳເລັດ:**

1. ມີເງິນບໍລິຫານ 4 ລ້ານປາຍກີບ
2. ບ້ວງເງິນສົ່ງເສີມງວດ 2 ແລະ 3 ປີ 2015 ໄດ້ຮັບ 2,400,000ກີບ; ງວດ 4,5,6,7, 8 ໄດ້ຮັບ 4,800,000 ກີບ
3. ມີເງິນໝູນວຽນ 24,289,453ກີບ
4. ເງິນແຮສຸກເສີນ 10 ປາຍລ້ານກີບ

**ຂໍ້ຫຍຸ້ງຍາກ:**

1. ບໍ່ມີງົບປະມານສະເພາະຕິດຕາມໂຄງການ ອາໄສເງິນແຊກຊຶມຈາກວຽກງານອື່ນ
2. ບໍ່ມີງົບປະມານເຄື່ອນໄຫວກິດຈະກຳ
3. ບໍ່ມີການຈັດຊື້; ອຸປະກອນການແພດ ແລະ ຢາແມ່ນຂັ້ນ ເມືອງຈັດສົ່ງໃຫ້
4. ບໍ່ມີເງິນລົງຊຸກຍູ້ຕິດຕາມບ້ານ ແລະ ຄົນເຈັບ
5. ເດືອນ 3ປີ 2016 ບໍ່ໄດ້ກວດເພາະວ່າບໍ່ມີເຈ້ຍຈຸ່ມ
6. ບໍ່ມີງົບປະມານຊື້ເຄື່ອງໃຊ້ຫ້ອງການ

**ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ

# ໂຄງການໄຂ້ຍຸງ

1. **ໂຮງໝໍແຂວງ ແລະ ພະແນກສາທາລະນະສຸກແຂວງ**

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **<u>ຜົນສຳເລັດ:</u>**<br>1. ປີ 2014-2015 ໄດ້ຮັບງົບປະມານທັງໝົດ 22,455.71 USD<br>2. ປີ 2016 Q1-Q4 ໄດ້ຮັບງົບປະມານທັງໝົດ 32,331,70 USD<br>3. ໄດ້ຮັບເງິນຈາກ ADB ຕ່ຳສຸດ 7,000USD<br>4. ເງິນຂົນສົ່ງມຸ້ງ 11,289,000 ກີບ<br>5. ເງິນປະຕິບັດກິດຈະກຳ 100,765,000 ກີບ<br><br>**ຕາໜ່າງຄວບຄຸມພະຍາດໄຂ້ຍຸງແຂວງຫຼວງນ້ຳທາປະກອບມີທັງໝົດ 67 ແຫ່ງ:**<br>1. ຂັ້ນແຂວງ 4 ແຫ່ງ, ຂັ້ນເມືອງ 5 ແຫ່ງ, ຂັ້ນສຸກສາລາ 39 ແຫ່ງ ແລະ ຂັ້ນບ້ານ 26 ແຫ່ງ<br>2. ນອກນັ້ນຍັງມີໂຄງການ PPM ຕົວແບບຢູ່ ເມືອງນ້ຳທາ ແລະ ເມືອງສິງ ລວມ 22 ແຫ່ງ<br>3. ທຸກການປະຕິບັດໄດ້ຮັບການຊີ້ນຳໆພາຂອງການນຳ-ການຈັດຕັ້ງທຸກຂັ້ນ<br>4. ສະພາບໄຂ້ຍຸງໂດຍທົ່ວໄປແມ່ນຕ່ຳໃນປີ 2014-2016 ຍົກເວັ້ນໃນບາງເມືອງ ແລະ ເຂດຫ່າງໄກສອກຫຼີກ<br>5. ໄດ້ມີການຈັດສົ່ງມຸ້ງໄປໃຫ້ແຕ່ລະເມືອງ<br>6. ໄດ້ມີການແຈກຢາຍມຸ້ງໂດຍອີງໃສ່ຕາມເຮືອນໄຂຄົນເຈັບຕິດເຊື້ອ<br>7. ຢາປິ່ນປົວມີພຽງພໍໃນການປິ່ນປົວ<br><br>**ກິດຈະກຳທີ່ໄດ້ປະຕິບັດໄຕມາດທີ 5 ເດືອນ ກໍລະກົດ ປີ 2014ຫາ ໄຕມາດທີ່ 8ເດືອນມິຖຸນາ ປີ 2015**<br>1. ລົງປຶກສາຫາລືກັບກຸມບໍລິສັດຖານຫີນ, ຢາງພາລາ, ບໍທອງແດງ, ໂຮງງານຢາສູບ ແລະ ບໍ່ເກືອ 1 ຄັ້ງ<br>2. ຈັດກອງປະຊຸມຄະນະກຳມະການວຽກງານ PPM 1 ຄັ້ງ<br>3. ຂັ້ນແຂວງລົງຊຸກຍູ້ຕິດຕາມຂັ້ນເມືອງ, ສຸກສາລາ ແລະ ບ້ານ 2 ຄັ້ງ<br>4. ອົບຮົມຂໍ້ມູນຂ່າວສານໃຫ້ ສຸກສາລາ 1 ຄັ້ງ ໄດ້ 39 ສຸກສາລາ<br>5. ໄດ້ຮັບມຸງເຄືອບຢາ 850 ດາງ<br><br>**ນອກຈາກນີ້ຍັງໄດ້ປະຕິບັດກິດຈະກຳຕ້ານ ແລະ ຄວບຄຸມໄຂ້ຍຸງລາຍ:**<br>1. ຈັດກ້ອງປະຊຸມຄະນະກຳມະທິການຕ້ານ ແລະ ຄວບຄຸມໄຂ້ຍຸງລາຍຂັ້ນແຂວງ, ຂັ້ນເມືອງ, ໂດຍແມ່ນຮອງເຈົ້າແຂວງເປັນປະທານ<br>2. ຈັດຕັ້ງກອງເລຂາຄວບຄຸມໄຂ້ຍຸງລາຍຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ<br>3. ພະແນກສາທາແຂວງອອກແຈ້ງການແນະນຳໃຫ້ 5 ເມືອງເຝົ້າລະວັງ, ກໍລະນີແລະສຳຫລວດໜອນນ້ຳ ບ້ານເປົ້າໝາຍທີ່ມີຄວາມສ່ຽງເມືອງນຶ່ງ 5 ບ້ານ<br>4. ທ່ານເຈົ້າແຂວງ ແລະ ພະແນກສາທາລະນະສຸກ ໄດ້ອອກຄຳສັ່ງແນະນຳໃນການກັນລະຄວບຄຸມພະຍາດໄຂ້ຍຸງລາຍໃຫ້ບັນພະແນກການສຳນັກງານອົງການຕ່າງໆ ແລະ ສອງກອງບັນຊາການຈັດຕັ້ງໃຫ້ມີວັນອານາໄມທຸກໆວັນສຸກແດງ<br>5. ສຳຫຼວດໜອນນ້ຳຍຸງລາຍ ທຸກເດືອນເລີ່ມແຕ່ເດືອນ 3 ປີ2016 ເປັນຕົ້ນມາ.<br>6. ໃຫ້ສຸຂະສຶກສາເປັນຄົວເຮືອນ 3 ຄັ້ງ ໄດ້ທັງໝົດ: 776 ຄອບຄົວ<br>7. ອອກຂ່າວວິທີປ້ອງກັນແລະກຳຈັດໜອນນ້ຳຍຸງລາຍທາງວິທະຍຸກະຈາຍສຽງ ອາທິດລະຄັ້ງ<br>8. ຈັດຕັ້ງຄະນະກຳມະການກວດກາແລະອານາໄມຂັ້ນບ້ານ 8 ບ້ານເທດສະບານທີ່ມີຄວາມສ່ຽງ.<br>9. ຕິດຄຳຂວັນບໍ່ມີໜອນນ້ຳຍຸງລາຍ ບໍ່ມີຍຸງລາຍ ບໍ່ມີໄຂ້ເລືອດອອກ ໃສ່ຕາມຊຸມຊົນ ຕະລາດ ຄິວລົດ ແລະ ຕາມເສັ້ນທາງຂຶ້ນລ່ອງ. |

| |
|---|
| **ຂໍ້ຫຍຸ້ງຍາກ:**<br>1. ຍັງມີບາງບັນຫາທີ່ຍັງບໍ່ທັນໄດ້ແກ້ໄຂໂດຍສະເພາະແມ່ນເງິນທົດແທນໃຫ້ໂຄງການ PPM ເມືອງນໍ້າທາ ແລະ ເມືອງສິງ ເນື່ອງຈາກວ່າທາງເມືອງໄດ້ຢືມເງິນບໍລິຫານລົງເກັບກຳຂໍ້ມູນແຕ່ຍັງບໍ່ໄດ້ເງິນຈາກໂຄງການທົດແທນເທື່ອ.<br>2. ການອະນຸມັດງົບປະມານຊ້າ ບໍ່ທັນປະຕິບັດກິດຈະກຳ.<br>3. ເງິນສະເພາະລົງຕິດຕາມວຽກງານແມ່ນບໍ່ມີ ຕ້ອງໄດ້ອາໄສເວລາໄປຕິດຕາມວຽກງານອື່ນ<br>4. ອັດຕາເບ້ຍລ້ຽງພະນັກງານຍັງຕໍ່າ<br>5. ການສົ່ງບົດລາຍງານຍັງຊັກຊ້າ ບໍ່ທັນເວລາ ແລະ ຄົບຖ້ວນ<br>6. ການນຳສົ່ງແຜ່ນແກ້ວຕົວຢ່າງຍັງບໍ່ເປັນປົກກະຕິ |
| **ຂໍ້ແນະນຳ:**<br>1. ໃຫ້ສືບຕໍ່ຂະຫຍາຍຕາໜ່າງຄວບຄຸມໄຂ້ຍຸງໃຫ້ທົ່ວເຂດຫ່າງໄກສອກຫຼີກ<br>2. ຕິດຕາມເຝົ້າລະວັງເຂດລະບາດຂອງພະຍາດໄຂ້ຍຸງ<br>3. ເອົາໃຈໃສ່ວຽກງານໂຄສະນາສຸຂະສຶກສາ ເພື່ອໃຫ້ພໍ່ແມ່ປະຊາຊົນຮູ້ໄດ້ ແລະ ເຂົ້າໃຈອາການ, ເສັ້ນທາງຕິດຕໍ່ ແລະ ວິທີປ້ອງກັນພະຍາດ, ຖ້າມີອາການສົງໄສ ໃຫ້ຮີບຮ້ອນໄປພົບແພດ ຫຼື ອສບ ເພື່ອບົ່ງມະຕິ ແລ້ວປິ່ນປົວໃຫ້ຖືກຕ້ອງທັນເວລາ |
| **ຂໍ້ສະເໜີ:**<br>**1. ສູນກາງ/ທີມງານ:**<br>**ບັນດາກິດຈະກຳຫຼັກທີ່ຕ້ອງໄດ້ຈັດຕັ້ງປະຕິບັດ:**<br>1. ການສົ່ງບົດລາຍງານບໍ່ຄວນຊັກຊ້າ ຕ້ອງໃຫ້ທັນເວລາ ແລະ ຄົບຖ້ວນ<br>2. ການນຳສົ່ງແຜ່ນແກ້ວຕົວຢ່າງຕ້ອງໃຫ້ເປັນປົກກະຕິ<br>3. ການຕິດຕາມຢາປິ່ນປົວເພື່ອຮັບປະກັນບໍ່ໃຫ້ມີຢາຂາດສາງໃນທຸກໝວດອາຍຸ<br>4. ເອົາໃຈໃສ່ການເກັບຮັກສາສຳເນົາເອກະສານການລາຍງານໃນແຕ່ລະຂັ້ນ |

**6. ຫ້ອງການສາທາລະນະສຸກເມືອງນໍ້າທາ**

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **ຜົນສຳເລັດ:**<br>1. ໄດ້ຮັບເງິນຂົນສົ່ງມຸ້ງ<br>2. ບໍ່ມີການຈັດຊື້ ອຸປະກອນການແພດ ແລະ ຢາປິ່ນປົວໄຂ້ຍຸງ ແມ່ນສູນກາງ ແລະ ແຂວງຈັດສົ່ງໃຫ້<br>3. ມຸ້ງໄດ້ແຈກຢາຍເຖິງບ້ານເປົ້າໝາຍສຳເລັດແລ້ວ<br>4. ການລາຍງານແມ່ນລາຍງານຕາມປົກກະຕິ<br>5. ອັດຕາຄົນເປັນພະຍາດໄຂ້ຍຸງຕໍ່າ |
| **ຂໍ້ຫຍຸ້ງຍາກ:**<br>1. ບໍ່ໄດ້ຮັບເງິນກິດຈະກຳ ແລະ ບໍ່ໄດ້ເຄື່ອນໄຫວກິດຈະກຳ<br>2. ບໍ່ໄດ້ຮັບເງິນບໍລິຫານ |
| **ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ |
| **ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ |

**7. ສຸກສາລາຈະເລີນສຸກ**

**ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສຳເລັດ:**

1. ໄດ້ໃຊ້ເງິນສົ່ງເສີມບໍລິ ຫານ 1 ລ້ານປາຍກີບ
2. ໄດ້ຮັບມຸ້ງຈາກເມືອງຈຳນວນ 1305 ດາງ
3. ໄດ້ຮັບອຸປະກອນການແພດ, ຢາ ແລະ ເຈ້ຍຈຸ່ມ
4. ໄດ້ເຄື່ອນໄຫວກິດຈະກຳແຈກຢາຍມຸ້ງຮ່ວມກັບເມືອງ ແລະ ມຸ້ງໄດ້ແຈກຢາຍໃຫ້ບ້ານເປົ້າໝາຍສຳເລັດແລ້ວ

**ຂໍ້ຫຍຸ້ງຍາກ:**

1. ບໍ່ໄດ້ຮັບເງິນຈາກເມືອງເພື່ອແຈກຍາຍມຸ້ງ
2. ບໍ່ມີການຈັດຊື້; ອຸປະກອນ, ມຸ້ງ ແລະ ຢາແມ່ນຂັ້ນແຂວງ ແລະ ເມືອງຈັດສົ່ງໃຫ້

**ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ

**8. ຫ້ອງການສາທາລະນະສຸກເມືອງສິງ**

**ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສຳເລັດ:**

ໃນປີ 2015-2016

1. ໄດ້ຮັບເງິນຂົນສົ່ງມຸ້ງຈຳນວນ 2,578,000 ກີບ
2. ໄດ້ຮັບເງິນຈຳນວນ 2,639,000 ກີບ ເພື່ອຈະໃຫ້ສຸກສາລາເກັບກ□າຂໍ້ມູນໃນການແຈກຢາຍມຸ້ງໃຫ້ບ້ານ
3. ມີເງິນແຊກຊີມສົ່ງເສີມມາໝູນໃຊ້
4. ໄດ້ຮັບມຸ້ງຈຳນວນ 5728ດາງ
5. ໄດ້ຮັບອຸປະກອນການແພດ, ຢາ ແລະ ເຈ້ຍຈຸ່ມ ຈາກແຂວງ

**ຂໍ້ຫຍຸ້ງຍາກ:** ງົບປະມານແຈກຢາຍມຸ້ງມີໜ້ອຍ ແລະ ບໍ່ພຽງພໍ

**ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ

**9. ສຸກສາລານ້ຳດ້າຍ**

**ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສຳເລັດ:**

1. ໄດ້ຮັບເງິນຂົນສົ່ງມຸ້ງ 3 ແສນປາຍກ່ວາກີບ
2. ກອງທຶນໝູນວຽນມີ 40 ປາຍລ້ານກ່ວາກີບຝາກໄວ້ທະນາຄານ
3. ມີເງິນແຮສຸກເສີນ 1-2 ລ້ານກີບ
4. ບໍ່ມີການຈັດຊື້; ອຸປະກອນ, ມຸ້ງ ແລະ ຢາແມ່ນຂັ້ນແຂວງ ແລະ ເມືອງຈັດສົ່ງໃຫ້

**ຂໍ້ຫຍຸ້ງຍາກ:** ງົບປະມານແຈກຢາຍມຸ້ງມີໜ້ອຍ ແລະ ບໍ່ພຽງພໍ

**ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ

### 10. ສຸກສາລາພູດອນທັນ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **ຜົນສຳເລັດ:**<br>1. ໄດ້ຮັບເງິນແຈກຢາຍມຸ້ງ 400,000ກີບ<br>2. ມີເງິນໝູນວຽນ 16 ລ້ານປາຍກ່ວາກີບ<br>3. ເງິນແຮສຸກເສີນ 2-3 ລ້ານກີບ<br>4. ໄດ້ຮັບມຸ້ງຈາກເມືອງຈຳນວນ 1229 ດາງ<br>5. ໄດ້ຮັບອຸປະກອນການແພດ, ຢາ ແລະ ເຈ້ຍຈຸ່ມ<br>6. ບໍ່ມີການຈັດຊື້; ອຸປະກອນ, ມຸ້ງ ແລະ ຢາແມ່ນຂັ້ນແຂວງ ແລະ ເມືອງຈັດສົ່ງໃຫ້ |
| **ຂໍ້ຫຍຸ້ງຍາກ:**<br>1. ບໍ່ມີງົບປະມານແຈກຢາຍມຸ້ງ<br>2. ງົບປະມານລົງເຄື່ອນໄຫວວຽກງານສຸຂະສຶກສາແມ່ນໃຊ້ບ້ວງເງິນບໍລິຫານ ແລະ ເງິນສົ່ງເສີມ |
| **ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ |
| **ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ |

### 11. ສະຖານີໄຂ້ຍຸງ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **ຜົນສຳເລັດ:**<br>ທາງພະແນກສາທາແລະສູນໄຂ້ຍຸງ ແມ່ກາຝາກ ແລະ ແມງໄມ້ກໍໃຫ້ອຳນວຍຄວາມສະດວກ ແລະ ລົງໄກ້ສິດຊູກຍູ້ຕິດຕາມ ແລະເຝິກອົບຮົມກັບທີ່ໃຫ້ແກ່ພະນັກງານຂັ້ນແຂວງ, ຂັ້ນເມືອງ ແລະ ບາງສຸກສາລາທີ່ເປັນເປົ້າໝາຍ<br>**ພັດສະດຸທີ່ໄດ້ຮັບ 2015**<br>1. ໄດ້ຮັບຢາໂກອາກແຕັມ ແລະ ເຈັ້ມຈຸ່ມ<br>2. 6x1 = 240 ແຜງ Expired 10/2016<br>3. 6x2 = 240 ແຜງ Expired 8/2016<br>4. 6x3 = 210 ແຜງ Expired 8/2016<br>5. 6x4 = 60 ແຜງ Expired 11/2016<br>6. ເຈັ້ຍຈຸ່ມ 2525 ຊອງ Expired 11/2016<br>7. Artesunate 120ກ້ອງ 31/01/2018<br>8. ໄດ້ແບ່ງປັນໃຫ້ 5 ເມືອງ ແລະ 39 ສຸກສາລາ<br><br>**ພັດສະດຸທີ່ໄດ້ຮັບ 2016**<br>1. ຮັບມຸ້ງເຄືອບຢາ 26,550 ດາງ ຈ່າຍໃຫ້ບ້ານເປົ້າໝາຍ 117 ບ້ານໃນ 5 ເມືອງ<br>2. ຮັບຢາ ແລະ ເຈັ້ຍຈຸ່ມ<br>3. ໂກອາກແຕັມ 6x1 = 240 ແຜງ Expired 30/09/2017<br>4. ໂກອາກແຕັມ 6x2 = 90 ແຜງ Expired 31/08 /2016<br>5. ໂກອາກແຕັມ 6x2 = 60 ແຜງ Expired 31/07 /2017<br>6. ໂກອາກແຕັມ 6x3 = 180 ແຜງ Expired 31/10/2017<br>7. ໂກອາກແຕັມ 6x4 = 270 ແຜງ Expired 3/08/2017 |

8. ເຈັ້ຍຈຸ່ມ 90 ກັບ Expired 16/12/2017
9. Artesunate 5 ກ່ອງ Expired 31/01/2018
10. ບໍ່ມີການຈັດຊື້ ມຸ້ງ ແລະ ຢາແມ່ນຂັ້ນສູນກາງ ແລະ ແຂວງເປັນຜູ້ຈັດສົ່ງໃຫ້
11. ໄດ້ຮັບມຸ້ງຍ້ອມຢາຍາວນານ ຈຳນວນ 5,728ດາງ
12. ໄດ້ຮັບເສື້ອໂຄສະນາ 16ຜືນ
13. ໄດ້ຮັບຢາຂ້າໜອນນ້ຳ (ຊາຍອະເບດ) ຈຳນວນ 179ກິໂລ ແລະ ຊຸດປ້ອງກັນການພົ່ນຢາ 1ຊຸດ
14. ໄດ້ຮັບເຄື່ອງກວດໄຂ້ຍຸງ RDT 18ກັບ
15. ໄດ້ຮັບຢາປິ່ນປົວໄຂ້ຍຸງຊະນິດກິນ 120 ແຜງ
16. ໄດ້ຮັບຢາປິ່ນປົວໄຂ້ຍຸງຊະນິດສັກ Artesunate 15ກ່ອງ
17. ໄດ້ຮັບເຊັບຕີບັອກ 40ກ່ອງ
18. ໄດ້ຮັບຖົງມື 8ກັບ

**ຂໍ້ຫຍຸ້ງຍາກ:**

1. ງົບປະມານມາຊ້າ ແລະ ບາງໄຕມາດແມ່ນມາໄວ້ໂພດ ແລະ ບໍ່ສາມາດປະຕິບັດກິດຈະກຳໄດ້ບາງກິດຈະກຳ
2. ຍັງມີບັນຫາບາງບັນຫາທີ່ຍັງບໍ່ທັນໄດ້ແກ້ໄຂໂດຍສະເພາະແມ່ນເງິນທົດແທນໃຫ້ໂຄງການ PPM ເມືອງນ້ຳທາ ແລະເມືອງສິງ ເນື່ອງຈາກວ່າທາງເມືອງໄດ້ຢືມເງິນບໍລິຫານລົງເກັບກຳຂໍ້ມູນແຕ່ບໍ່ໄດ້ເງິນໂຄງການທົດແທນ.
3. ຂໍ້ມູນຂັ້ນບ້ານແມ່ນບໍ່ໄດ້ຂໍ້ມູນຈາກ 26 ບ້ານຍ້ອນ ອສບ ບໍ່ໄດ້ເຮັດວຽກ
4. ຂັ້ນເມືອງມີການສັບປ່ຽນພະນັກງານຢູ່ເລື້ອຍໆ

**ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ

## 12. ສຸກສາລານາເຕີຍ

**ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສຳເລັດ:**

1. ມີເງິນບໍລິຫານ 4 ລ້ານປາຍກີບ
2. ໄດ້ຮັບບ້ອງເງິນສົ່ງເສີມງວດ 2 ແລະ 3 ປີ2015 ຈຳນວນ 2,400,000ກີບ; ງວດ 4,5,6,7,8 ໄດ້ຮັບ 4,800,000ກີບ
3. ໄດ້ຮັບມຸ້ງຈາກເມືອງຈຳນວນ 1412 ດາງ ແລະ ໄດ້ຮັບອຸປະກອນການແພດ, ຢາ ແລະ ເຈ້ຍຈຸ່ມ
4. ມີເງິນໝູນວຽນ 24,289,453ກີບ
5. ເງິນແຮສຸກເສີນ 10 ປາຍລ້ານກີບ
6. ບໍ່ມີການຈັດຊື້; ອຸປະກອນ, ມຸ້ງ ແລະ ຢາແມ່ນຂັ້ນແຂວງ ແລະ ເມືອງຈັດສົ່ງໃຫ້

**ຂໍ້ຫຍຸ້ງຍາກ:**

1. ບໍ່ມີງົບປະມານຈາກເມືອງເພື່ອແຈກຢາຍມຸ້ງ
2. ບໍ່ມີງົບປະມານສະເພາະຕິດຕາມໂຄງການ ອາໄສເງິນແຊກຊຶມຈາກວຽກງານອື່ນ

**ຂໍ້ແນະນຳ:** ໃຫ້ສືບຕໍ່ປະຕິບັດຕາມແຜນງົບປະມານຮ່ວງເງິນແຊກຄຸມສົ່ງເສີມທີ່ມີຢູ່ແລ້ວ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ

# ໂຄງການວັນນະໂລກ

## 1. ໂຮງໝໍແຂວງ ແລະ ພະແນກສາທາລະນະສຸກແຂວງ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **ຜົນສຳເລັດ:**<br>1. ມີການປະຕິບັດກິດຈະກຳໂຄງການໄດ້ດີ<br>2. ສາມາດປິ່ນປົວຄົນເຈັບທີ່ເປັນວັນນະໂລກ<br>3. ມີເຄື່ອງ Gen-Xpert ສາມາດຊ່ວຍ ໃນການບົ່ງມະຕິວັນນະໂລກໄດ້<br>4. ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້<br>5. ການສົ່ງບົດລາຍງານໄດ້ສົ່ງຕາມປົກກະຕິ<br>6. ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ<br>7. ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ<br>8. ສູນກາງໄດ້ໂອນເງິນໃຫ້ແຂວງໄດ້ຮັບເງິນ Q1-2 ໄດ້ຮັບ 80,186,257 ກີບ<br>9. Q3 ໄດ້ຮັບ 66,571,000 ກີບ<br>10. Q4 ໄດ້ຮັບ 54,780,000 ກີບ<br>11. ລວມທັງໝົດ: 201,537,257 ກີບ<br>12. ສູນກາງເປັນຜູ້ຈັດຊື້ ຕາມແຜນການທີ່ໄດ້ສະເໜີ<br>13. ໄດ້ຮັບອຸປະກອນ-ຢາ ພຽງພໍແລ້ວ<br>14. ໄດ້ລາຍງານທຸກໆໄຕມາດຕາມແຜນການແຕ່ລະຂັ້ນສຸກສາລາ-ເມືອງ-ແຂວງ-ສູນກາງ<br>15. ການລາຍງານສະຖິຕິແມ່ນ 03 ເດືອນລາຍງານເທື່ອໜຶ່ງ<br>16. ສຳລັບດ້ານການເງິນໄດ້ລາຍງານທຸກໆເດືອນ, ການລາຍງານແມ່ນໃຊ້ແບບຟອມ ທີ່ທາງສູນໄດ້ກຳນົດໃຫ້.<br>17. ຄົນເຈັບຕິດເຊື້ອຮ່ວມ TB/HIV ຕົວເລກສະສົມ 2007-2016 ທີ່ໄດ້ຂຶ້ນທະບຽນ 20ຄົນ ປົວຫາຍດີ 12ຄົນ ຕາຍ 6ຄົນ ກຳລັງປິ່ນປົວຢູ່ໂຮງໝໍເສດຖາ 2ຄົນ.<br>18. ຄົນເຈັບເປັນ MDR-TB ຕົວເລກສະສົມໄດ້ຂຶ້ນທະບຽນ 7ຄົນ ປົວຫາຍດີ 2ຄົນ ຕາຍ 3ຄົນ ກຳລັງປິ່ນປົວຢູ່ໂຮງໝໍເສດຖາ 2ຄົນ<br>19. ຄົນເຈັບທີ່ເປັນວັນນະໂລກພົບຫຼາຍກ່ວາໝູ່ ແມ່ນຢູ່ ເມືອງສິງ ແລະ ເມືອງລອງ |
| **ຂໍ້ຫຍຸ້ງຍາກ:**<br>1. ການຮັບເງິນຈາກສູນກາງບາງໄຕມາດຍັງຊ້າ, ສູນກາງໂອນໃຫ້ຊ້າ ເພາະສູນກາງ ໄດ້ຮັບຊ້າ,ຂຶ້ນແຜນຊ້າ ຍ້ອນຜູ້ດຽວຮັບຫລາຍວຽກ<br>2. ບາງໄຕມາດມາໄວໂພດ ເຮັດໃຫ້ປະຕິບັດບໍ່ທັນກັບເວລາ,<br>3. ເວລາແຂວງໂອນເງິນໃຫ້ເມືອງ ກໍຊ້າໄປຕາມໆກັນ<br>4. ເງິນທີ່ໄດ້ຮັບຈາກສູນກາງ ຍັງບໍ່ພຽງພໍ, ບາງກິດຈະກຳກໍ່ບໍ່ໄດ້ປະຕິບັດ ແລະ ບາງກິດຈະກ□າໄດ້ແຕ່ບໍ່ພຽງພໍ<br>5. ຍັງຂາດບຸກຄະລາກອນຮັບຜິດຊອບວຽກງານຈັດຊື້<br>6. ຖ້າມີກິດຈະກຳຕອ້ງໄດ້ເຮັດຈັດຊື້ແມ່ນ PTC ເປັນຜູ້ເຮັດ.<br>7. ການຊອກຄົ້ນຫາກໍລະນີຍັງຕໍ່າ ຍ້ອນການນຳສົ່ງຕົວຢ່າງຍັງຈຳກັດຢູ່ບາງເມືອງ<br>8. ການບົ່ງມະຕິວັນນະໂລກຍັງເນັ້ນໃສ່ແຕ່ອາການແລະກວດຂີ້ກະເທີ່ຍັງບໍ່ທັນນຳໃຊ້ລັງສີ, ວັນນະໂລກ ເບກາ ລົບ ຍັງມີສັດສ່ວນຕໍ່າ ຍ້ອນວ່າການເສື່ອມສານລະຫວ່າງການກວດເຂດນອກ ແລະ ເຂດໃນຂອງໂຮງໝໍຍັງຈຳກັດ<br>9. ການປະຕິບັດຍຸດທະສາດ ດອັດ DOTS ( Direct observed treatment short course) ຍັງບໍ່ທັນໄດ້ດີ ຜົນຕາມມາຈະພົບວັນນະໂລກດື້ຢາສູງ ຍ້ອນຄົນເຈັບບໍ່ຢາກຟັງຄວາມການມາກິນຢາເຮັດໃຫ້ລຳຄານ ແລະ ເສັຽເວລາ ບໍ່ເຫັນຄວາມສຳຄັນ. |

10. ສາງຢາຍັງຂາດ, ການຈັດລະບຽບແຍກຊະນິດຂອງຢາ, ແຍກອາຍຸການນຳໃຊ້, ເອົາບັດຕິດຕາມສາງຕິດໃສ່, ຍ້ອນຜູ້ດຽວຮັບຜິດຊອບຫລາຍວຽກ
11. ອັດຕາການນຳໃຊ້ເຄື່ອງ Gen expert ຍັງຕ່ຳ 6 ເດືອນສົ່ງຕົວຢ່າງມາກວດພຽງ 51 ຕົວຢ່າງ ມີ 2 ຕົວຢ່າງທີ່ຜົນບໍ່ຈະແຈ້ງທາງເມືອງສົ່ງມາ ແຕ່ເອົາມາກວດຢືນຢັນວ່າແມ່ນວັນນະໂລກທັງສອງ ຍ້ອນການປົກຄຸມຂອງຕາໜ່າງຍັງບໍ່ທັນເຂົ້າເຖິງ ກຳນົດເອົາໜ້ອຍເມືອງໃຫ້ສົ່ງຕົວຢ່າງໄປກວດ
12. ກິດຈະກຳຮ່ວມເອດ ວັນນະໂລກ ໄດ້ດຳເນີນໄປດ້ວຍດີ ວັນນະໂລກທຸກກໍລະນີໄດ້ກວດຫາໂລກເອດ 100% ຍ້ອນຍ້ອນມີການປະສານງານກັນດີໃນ 2 ໜ່ວຍງານ. ການເກັບມ້ຽນເອກະສານໂດຍສະເພາະປຶ້ມຂຶ້ນທະບຽນຄົນເຈັບວັນນະໂລກເພື່ອບໍ່ຢາກໃຫ້ເປີດເຜີຍຄວາມລັບ ແລະ ໄດ້ ໃຫ້ IPT ທຸກກໍລະນີ.
13. ວັນນະໂລກດື້ຢາເຫັນວ່າມີແນວໂນ້ມສູງຂຶ້ນ ບາງຄົນເອົາໄປປິ່ນປົວຢູ່ສູນກາງ ລັກໜີກັບມາແຂວງ ຂາດການຕິດຕາມ, ຍັງຈະສືບຕໍ່ເພີ່ມຂຶ້ນສູງ ຍ້ອນການເຮັດດອັດບໍ່ໄດ້ດີ, ສຸຂະສຶກສາຍັງບໍ່ແທດເໝາະແລະທົ່ວເຖິງ
14. ການຄົ້ນພົບວັນນະໂລກໃນເດັກນ້ອຍຍັງຕ່ຳ, ຍ້ອນຂອດປະສານງານກັບແມ່ແລະເດັກຍັງຈຳກັດ.
15. ສຸຂະສຶກສາຍັງບໍ່ທັນເຂົ້າເຖິງຊຸມຊົນ, ຊົນຊາດຊົນເຜົ່າທີ່ຢູ່ຫ່າງໄກສອກຫລີກ ຍ້ອນຂາດການເສື່ອມສານ, ເຮັດຕ່າງໃຜຕ່າງລາວແຕ່ລະພາກສ່ວນ, ແຕ່ລະໂຄງການ.
16. ຍັງຂາດບຸກຄະລາກອນໃນການເຮັດວຽກເຮົາບໍ່ມີພະນັກງານຈັດຊື້, ນາຍສາງ, ບັນຊີສາງ
17. PTC ເຮັດວຽກຫຼາຍໜ້າທີ່, ບາງເທື່ອຍັງໄດ້ເປັນ DTM ຂອງໂຮງໝໍແຂວງອີກ.
18. ສະນັ້ນບາງໜ້າວຽກກໍ່ເຮັດຫຼ້ອນ, ບາງໜ້າວຽກກໍຍັງມີຂໍ້ຄົງຄ້າງໃຫ້ເຫັນຢູ່.
19. ອັດຕາການຕາຍ, ການຫາຍຕົວ ຍັງພົບເຫັນສູງໃນບາງເມືອງ
20. ຄົນເຈັບບາງກໍລະນີ ຍັງບໍ່ໃຫ້ການຮ່ວມມືໃນການປິ່ນປົວ (ບໍ່ເອົາໃຈໃສ່ປິ່ນປົວ)
21. ບ້ານຄົນເຈັບຢູ່ຫ່າງໄກສຸກສາລາ ແລະ ໂຮງໝໍ
22. ມີ 2 ເມືອງທີ່ຍັງບໍ່ມີບ່ອນນອນສະເພາະຄົນເຈັບວັນນະໂລກ (ຍັງນອນລວມກັບຄົນເຈັບທົ່ວໄປ)
23. ການຊອກຄົ້ນກໍລະນີສົງໃສຍັງຕ່ຳ (ສຸກສາລານຳສົ່ງຕົວຢ່າງຍັງຕ່ຳ, DTM ບາງເມືອງມີຫຼາຍໜ້າທີ່, ລໍຖ້າຄົນເຈັບມາໂຮງໝໍເອງ)
24. ເວລາລົງປຽມບ້ານ ການກັ່ນຕອງຊອກຫາຄົນເຈັບທີ່ສົງໃສເປັນວັນນະໂລກຍັງຕ່ຳ.

**<u>ຂໍ້ແນະນຳ:</u>**

1. ໃຫ້ຂຶ້ນແຜນຕຽມໄວ້, ຕິດຕໍ່ພົວພັນສູນ,ຈັດຕັ້ງແລ້ວສະຫຼຸບໃຫ້ທັນເວລາ
2. ໃຫ້ເພີ່ມການນຳສົ່ງຕົວຢ່າງໃຫ້ກວມເອົາໝົດທຸກເມືອງ ໂດຍສະເພາະກຸ່ມເປົ້າໝາຍທີ່ກຳນົດໃຫ້.
3. ແຈກກັບໃສ່ຕົວຢ່າງໃຫ້ທົ່ວເຖິງທຸກເມືອງທຸກສຸກສາລາ ຖ້າບໍ່ມີກ່ອງກົ້ນສ້ອຍໃຫ້ເອົາກັບທຳມະດາກໍໄດ້ ແຕ່ຕ້ອງແນະນຳອັດໃຫ້ແຈບ.
4. ຄວາມຊຸກຊຸມຂອງພະຍາດວັນນະໂລກໃນແຂວງນີ້ຍັງສູງຕ້ອງໄດ້ເອົາໃຈໃສ່ໃນການຄວບຄຸມແລະຄຸ້ມຄອງຊອກຄົ້ນໃຫ້ໄດ້ຫລາຍປິ່ນປົວໃຫ້ຫາຍດີ ມີດັອດເປັນຫລັກການໃນການປະຕິບັດ.
5. ວັນນະໂລກດື້ຢາໃນແຂວງນີ້ມີທ່າອ່ຽງເພີ່ມຂຶ້ນ ຍ້ອນປະຕິບັດດອັດ ບໍ່ໄດ້.
6. ສຸກຂະສຶກສາໃຫ້ເຂົ້າເຖິງຊຸມຊົນແລະຊົນຊາດຊົນເຜົ່າຫ່າງໄກສອກຫລີກ ເພື່ອໃຫ້ເຂົ້າໃຈແລະເຝົ້າລະວັງ ພ້ອມນັ້ນຕ້ອງໄດ້ເສື່ອມສານກັບໂຄງການອື່ນໃນຂົງເຂດສາທາ.
7. ເອົາໃຈໃສ່ຊົນເຜົ່າທີ່ມັກພົບຫລາຍໂດຍສະເພາະເຜົ່າອາຄ່າ,ກືມມຸ ແລະ ມົ້ງ.
8. ເວລາລົງປຽມບ້ານ ການກັ່ນຕອງຊອກຫາຄົນເຈັບທີ່ສົງໃສເປັນວັນນະໂລກຍັງຕ່ຳ
9. ອັດຕາຄົນເຈັບວັນນະໂລກເພີ້ມຂຶ້ນສູງ ແລະ ຍັງມີຄົນເຈັບວັນນະໂລກທີ່ພົບເຊື້ອດື້ຕໍ່ຢາ ແລະ ຄົນເຈັບສ່ວນໃຫຍ່ແມ່ນບໍ່ໃຫ້ການຮ່ວມມື
10. ຂາດພະນັກງານເປັນຕົ້ນແມ່ນ ພະນັກງານວັນນະໂລກ ແລະ ພະນັກງານວິເຄາະຢູ່ໂຮງໝໍແຂວງ
11. ການເຮັດ DOT ຂັ້ນສູກສາລາແລະເມືອງຍັງບໍ່ທັນໄດ້ດີ (ມີບັນຫາໃນການດື້ຕໍ່ຢາ)

12. ອັດຕາການຕາຍ, ການຫາຍດີ ຍັງພົບເຫັນສູງໃນບາງເມືອງ
13. ຄົນເຈັບບາງກໍລະນີ ຍັງບໍ່ໃຫ້ການຮ່ວມມືໃນການປິ່ນປົວ (ບໍ່ເອົາໃຈໃສ່ປິ່ນປົວ)
14. ບ້ານຄົນເຈັບຢູ່ຫ່າງໄກສຸກສາລາ ແລະ ໂຮງໝໍ
15. ມີ 2 ເມືອງທີ່ຍັງບໍ່ມີບ່ອນນອນສະເພາະຄົນເຈັບວັນນະໂລກ (ຍັງນອນລວມກັບຄົນເຈັບທົ່ວໄປ)
16. ການຊອກຄົ້ນກໍລະນີສົງໃສຍັງຕ່ຳ (ສຸກສາລານຳສົ່ງຕົວຢ່າງຍັງຕ່ຳ, DTM ບາງເມືອງມີຫຼາຍໜ້າທີ່, ລໍຖ້າຄົນເຈັບມາໂຮງໝໍເອງ)

**ຂໍ້ສະເໜີ:**

1. ສະເໜີການນຳແຂວງພິຈາລະນາຄົ້ນຄວ້າງົບປະມານລັດຮ່ວງແຊກຄຸມສົ່ງເສີມເຂົ້າຊ່ວຍວຽກງານວັນນະໂລກໂດຍສະເພາະຄ່ານຳສົ່ງຕົວຢ່າງໄປກວດນຳເຄື່ອງ Gen Expert.
2. ຜູ້ຮັບຜິດຊອບວັນນະໂລກຂັ້ນແຂວງແນະນຳພື້ນຖານ, ຜູ້ຕິດຝົ່ນເປັນວັນນະໂລກຕ້ອງໄດ້ເອົາໃຈໃສ່ເຮັດ DOT ຄືໃຫ້ໄດ້ກິນຢາທຸກມື້

**2. ຫ້ອງການສາທາລະນະສຸກເມືອງນ້ຳທາ**

| **ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ** |
|---|
| **ຜົນສຳເລັດ:**<br>1. ປີ 2015 ໄດ້ຮັບເງິນຈຳນວນ 13,766,000ກີບ, ເງິນບໍລິຫານ 3,010,000ກີບ ແລະ ບ້ວງສົ່ງເສີມຈຳນວນໜຶ່ງ<br>2. ມີການປະຕິບັດກິດຈະກຳໂຄງການໄດ້ດີ<br>3. ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້<br>4. ການສົ່ງບົດລາຍງານໄດ້ສົ່ງຕາມປົກກະຕິ<br>5. ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ<br>6. ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ<br>7. ສູນກາງເປັນຜູ້ຈັດຊື້ ຕາມແຜນການທີ່ໄດ້ສະເໜີ<br>8. ໄດ້ຮັບອຸປະກອນການແພດ ແລະ ຢາພຽງພໍແລ້ວ<br>9. ໄດ້ລາຍງານທຸກໆໄຕຼມາດຕາມແຜນການແຕ່ລະຂັ້ນສຸກສາລາ-ເມືອງ-ແຂວງ-ສູນກາງ<br>10. ການລາຍງານສະຖິຕິແມ່ນ 03 ເດືອນລາຍງານເທື່ອໜຶ່ງ<br>11. ສຳລັບດ້ານການເງິນໄດ້ລາຍງານທຸກໆເດືອນ, ການລາຍງານແມ່ນໃຊ້ແບບຟອມ ທີ່ທາງສູນໄດ້ກຳນົດໃຫ້.<br>12. ຄົນເຈັບມາບໍລິການບໍ່ຫລາຍ ຍ້ອນວ່າຢູ່ເຫດສະບານເມືອງ |
| **ຂໍ້ຫຍຸ້ງຍາກ:**<br>1. ຍັງຂາດບຸຄະລາກອນໃນການເຮັດວຽກງານຈັດຊື້, ຖ້າມີກິດຈະກຳຕອ້ງແມ່ນ PTC ເປັນຜູ້ເຮັດໄດ້ເຮັດຈັດຊື້ໃຫ້<br>2. ການຕິດຕໍ່ປະສານງານລະຫວ່າງພະແນກສາທາເມືອງ ແລະ ແຂວງ ຍັງບໍ່ສະດວກ ແລະ ຕໍ່ເນື່ອງ<br>3. ງົບປະມານຊັກຊ້າ ແລະ ບໍ່ມີເງິນລົງຕິດຕາມສຸກສາລາ<br>4. ບໍລິການໃຫ້ຄຳປຶກສາ (ບໍ່ມີສູນປິ່ນປົວ)<br>5. ບໍ່ໄດ້ເຮັດພາລະບົດບາດຂອງໂຮງໝໍ<br>6. ບໍ່ມີການອົບຮົມ<br>7. ການນຳສົ່ງຕົວຢ່າງຍັງບໍ່ທັນມີ ເພາະເບື້ອງຕົ້ນກຳນົດເອົາແຕ່ເມືອງສິງ ກັບ ເມືອງລອງ |
| **ຂໍ້ແນະນຳ:**<br>1. ການສຸຂະສຶກສາຂາດງົບປະມານ ຍ້ອນວ່າວັນນະໂລກບໍ່ມີເງິນຮ່ວງສຸຂະສຶກສາ, ຂາດການເສື່ອມສານກັບຂົງເຂດອື່ນ.<br>2. ການນຳສົ່ງຕົວຢ່າງຍັງບໍ່ທັນມີ ເພາະເບື້ອງຕົ້ນກຳນົດເອົາແຕ່ເມືອງສິງກັບເມືອງລອງ |

3. ຕ້ອງໄດ້ກັ່ນກອງ ແລະ ຄຸ້ມຄອງຄົນເຈັບຊ່ວຍແຂວງ
4. ໃຫ້ເສື່ອມສານກັບພາກສ່ວນອື່ນພາຍໃນເມືອງ ຫລື ໃຫ້ຜູ້ຮັບຜິດຊອບວັນນະໂລກຂັ້ນແຂວງຂຶ້ນແຜນຂໍຮ່ວງແຊກຄຸມສິ່ງເສີມ
5. ໃຫ້ສົ່ງສົ່ງຕົວຢ່າງ ເພາະເງິນນໍາສົ່ງຕົວຢ່າງໂຄງການມີຕອບສະໜອງໃຫ້ ສົ່ງເຂົ້າເຄື່ອງ Gen-Expert ຢູ່ແຂວງເລີຍ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ ເພື່ອຈະເຄື່ອນໄຫວກິດຈະກໍາຊອກຄົ້ນຄົນເຈັບເຂດທີ່ຢູ່ຮ່າງໄກສອກຫຼີກ

## 8. ສຸກສາລາຈະເລີນສຸກ

**ສັງລວມບັນດາກິດຈະກໍາຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສໍາເລັດ:**

1. ໄດ້ຮັບເງິນສົ່ງເສີມປະມານ 1,000,000ກີບ
2. ສ່ວນເງິນຄ່າສົ່ງຕົວຢ່າງ ແມ່ນໄດ້ຮັບເວລາໄປສົ່ງຕົວຢ່າງຢູ່ເມືອງ
3. ການຈັດຕັ້ງປະຕິບັດວຽກງານແມ່ນເຮັດຕາມແຜນການວາງໄວ້
4. ການລາຍງານແມ່ນປົກກະຕິ

**ຂໍ້ຫຍຸ້ງຍາກ:**

1. ນໍາສົ່ງຕົວຢ່າງໜ້ອຍ ຍ້ອນວ່າກັບໃສ່ຕົວຢ່າງບໍ່ພໍ
2. ການບັນທຶກຜູ້ສົງໄສໄປກວດຍັງບໍ່ເປັນລະບຽບ, ບາງຄົນກໍບໍ່ມີຜົນກວດສົ່ງກັບມາແຕ່ເມືອງຍ້ອນຜູ້ດຽວມີວຽກຫລາຍໜ້າທີ່
3. ການເຮັດ DOT ບໍ່ໄດ້ປະຕິບັດຕາມລະບຽບການ (ເອົາຢາໃຫ້ຄົນເຈັບໄປກິນເອງ)
4. ຫຍຸ້ງຍາກໃນການສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸ ແລະ ອາຄາ
5. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈໍາກັດ ແລະ ບໍ່ພຽງພໍ

**ຂໍ້ແນະນໍາ:**

1. ການສຸຂະສຶກສາຂາດງົບປະມານ ຍ້ອນວ່າວັນນະໂລກບໍ່ມີເງິນຮ່ວງສຸຂະສຶກສາ, ຂາດການເສື່ອມສານກັບຂົງເຂດອື່ນ.
2. ການນໍາສົ່ງຕົວຢ່າງຍັງບໍ່ທັນມີ ເພາະເບື້ອງຕົ້ນກໍານົດເອົາແຕ່ເມືອງສິງກັບເມືອງລອງ
3. ແນະນໍາໃຫ້ເບິ່ງຄືນໃຫ້ລະອຽດກ່ຽວກັບການບັນທຶກຜູ້ສົງໄສໄປກວດຍັງໃຫ້ເປັນລະບຽບ

**ຂໍ້ສະເໜີ:** ສະເໜີຂໍທຶນການຊ່ວຍເຫຼືອຈາກ ກອງທຶນໂລກອີກ ເພື່ອຈະເຄື່ອນໄຫວກິດຈະກໍາຊອກຄົ້ນຄົນເຈັບເຂດທີ່ຢູ່ຮ່າງໄກສອກຫຼີກ

## 9. ຫ້ອງການສາທາລະນະສຸກເມືອງສິງ

**ສັງລວມບັນດາກິດຈະກໍາຫຼັກທີ່ໄດ້ຈັດຕັ້ງປະຕິບັດ**

**ຜົນສໍາເລັດ:**

1. ໄດ້ຮັບເງິນຈາກແຂວງ ປີ 2015
   - Q1+2 = 7,408,000ກີບ
   - Q3 = 4,380,000ກີບ
   - Q4 = 3,800,000ກີບ

| |
|---|
| 2. ໄດ້ຮັບເງິນຈາກແຂວງ ປີ 2016<br>- Q1 = 4,280,000ກີບ<br>- Q2 = 4,470,000ກີບ |
| **ຂໍ້ຫຍຸ້ງຍາກ:**<br>1. ຄົນເຈັບສົງໃສມາກວດຫລາຍສົມຄວນ ແລະ ພົບເຊື້ອຫລາຍສົມຄວນ 22 ໃນຈຳນວນຜູ້ສົງໃສມາກວດ 182 ຄົນ, ສ່ວນຫລາຍເຜົ່າອາຄາ, ຂະມຸ ແລະ ມົ້ງ ຍ້ອນຜູ້ຮັບຜິດຊອບໄດ້ເອົາໃຈໃສ່ເຄື່ອນໄຫວຽກງານໄດ້ດີ<br>2. ຍັງຂາດບຸຄະລະກອນໃນການເຮັດວຽກງານຈັດຊື້,ຖ້າມີກິດຈະກຳຕອ້ງໄດ້ເຮັດຈັດຊື້ແມ່ນ PTC ເປັນຜູ້ເຮັດ<br>3. ສຸຂະສຶກສາຍັງບໍ່ທັນເຂົ້າເຖິງຊຸມຊົນຂອງຊົນຊາດຊົນເຜົ່າ ຍ້ອນວັນນະໂລກບໍ່ມີງົບປະມານ<br>4. ການຄຸ້ມກໍລະນີຄົນເຈັບ ບໍ່ມີ DOT ຍ້ອນຜູ້ຮັບຜິດຊອບວັນນະໂລກພຽງ 2 ຄົນ<br>5. ການບໍລິການສ່ວນຫຼາຍແມ່ນຄົນເຈັບມາຈາກເມືອງລອງ<br>6. ເຈ້ຍຈຸ່ມສ່ວນຫຼາຍມອບໃຫ້ໂຮງໝໍນຳໃຊ້<br>7. ຄົນເຈັບ TB ສ່ວນຫຼາຍແມ່ນຊົນເຜົ່າອາຄາ<br>8. ສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸແລະອາຄາ<br>9. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈຳກັດ ແລະ ບໍ່ພຽງພໍ |
| **ຂໍ້ແນະນຳ:**<br>1. ໃຫ້ສືບຕໍ່ ແລະກະຈາຍວຽກຊອກຄົ້ນໃຫ້ສຸກສາລາແຕ່ລະສຸກສາລາໃຫ້ມີສ່ວນຮ່ວມ<br>2. ໃຫ້ເມືອງຊ່ວຍງົບປະມານໃນການກິດຈະກຳສົ່ງຕົວຢ່າງ, ແລະ ໃຫ້ເສື່ອມສານກັບພະຍາດອື່ນ |
| **ຂໍ້ສະເໜີ:**<br>1. ໃຫ້ເອົາໃຈໃສ່ທີ່ສຸດກ່ຽວກັບການປະຕິບັດ DOT ເພາະຖ້າເຮັດບໍ່ໄດ້ ຈະມີຜົນສະທ້ອນສູງຈະພາໃຫ້ເປັນວັນນະໂລກດື້ຕໍ່ຢາ. |

## 10. ສຸກສາລານ້ຳດ້າຍ

| ສັງລວມບັນດາກິດຈະກຳຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **ຜົນສຳເລັດ:**<br>1. ໄດ້ຮັບເງິນສົ່ງຕົວຢ່າງ 20,000ກີບ ຕໍ່ຄັ້ງ<br>2. ກອງທຶນໝູນວຽນມີ 40 ປາຍລ້ານກ່ວາກີບຝາກໄວ້ທະນາຄານ<br>3. ມີເງິນແຮສຸກເສີນ 1-2 ລ້ານກີບ<br>4. ການປະຕິບັດວຽກງານແມ່ນເຮັດຕາມແຜນການທີ່ວາງໄດ້ |
| **ຂໍ້ຫຍຸ້ງຍາກ:**<br>1. ນຳສົ່ງຕົວຢ່າງໜ້ອຍ ຍ້ອນວ່າກັບໃສ່ຕົວຢ່າງບໍ່ພໍ ຍ້ອນຄົນໜ້ອຍແຕ່ມີຫລາຍວຽກ<br>2. ມີການເຄື່ອນໄຫວກ່ຽວກັບວັນນະໂລກ ໄລຍະ 6 ເດືອນຕົ້ນປີສົ່ງຕົວຢ່າງໄປກວດ 4 ຄົນ ພົບ 3<br>3. ການຊອກຄົ້ນແລະກັ່ນຕອງຫາກໍລະນີວັນນະໂລກຍັງບໍ່ທັນກວ້າງຂວາງ ຍ້ອນພະນັກງານບາງຄົນຍັງບໍ່ເຫັນຄວາມສຳຄັນ, ບໍ່ເອົາວຽກງານນີ້ເຂົ້າຫາຊຸມຊົນ ຊົນຊາດຊົນເຜົ່າ ທີ່ຫ່າງໄກສອກຫລີກ<br>4. ການໂຄສະນາສຸຂະສຶກສາມີຂໍ້ຈຳກັດແລະຫຍຸ້ງຍາກ, ບໍ່ປະຕິບັດຕາມ ຍ້ອນວ່າການສື່ສານພາສາປາກເວົ້າ, ຊົນເຜົ່າຟັງແຕ່ເວລາເວົ້າແຕ່ບໍ່ປະຕິບັດຕາມ. |

| |
|---|
| 5. ຄົນເຈັບ TB 13 ຄົນທີ່ມາກິນຢານໍາສຸກສາລາ ສ່ວນຫຼາຍແມ່ນຊົນເຜົ່າອາຄາ<br>6. ການເຮັດ DOT ບໍ່ໄດ້ປະຕິບັດຕາມລະບຽບການ (ເອົາຢາໃຫ້ຄົນເຈັບໄປກິນເອງ)<br>7. ບໍ່ໄດ້ກວດຄົນໃກ້ສິດທີ່ເປັນ TB<br>8. ບໍ່ມີງົບປະມານຢ້ຽມຢາມບ້ານ (ເມືອງລົງຢ້ຽມຢາມເອງ)<br>9. ເວລາໄປເກັບຂໍ້ມູນແມ່ນອາໄສໃນເວລາໄປວຽກອື່ນ<br>10. ບໍ່ໄດ້ລາຍງານໃຫ້ເມືອງປົກກະຕິຫຍຸ້ງຍາກໃນການສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸ ແລະ ອາຄາ<br>11. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈໍາກັດ ແລະ ບໍ່ພຽງພໍ |
| **<u>ຂໍ້ແນະນໍາ:</u>**<br>1. ໃຫ້ເອົາໃຈໃສ່ທີ່ສຸດກ່ຽວກັບການຄວບຄຸມ DOT ເພາະວ່າວັນນະໂລກເຂດນີ້ມີຄວາມຊຸກຊຸມຫລາຍ<br>2. ໃຫ້ສືບຕໍ່ຄົ້ນຄວ້າແລະລົງເລິກເຖິງຊຸມຊົນຫ່າງໄກສອກຫລີກ.<br>3. ຕ້ອງໄດ້ພ້ອມກັນເສື່ອມສານກັບວຽກງານອື່ນ ເພື່ອເຄື່ອນໄຫວກິດຈະກໍາໃຫ້ໄປຕາມແຜນການວາງໄວ້<br>4. ໃຫ້ສືບຕໍ່ຊອກຫາກໍລະນີສົງໄສໃຫ້ໄດ້ຫລາຍກວ່າເກົ່າໃຫ້ກວ້າງຂວາງ |
| **<u>ຂໍ້ສະເໜີ:</u>** ບໍ່ມີ |

**11. ສຸກສາລາພູດອນທັນ**

| **ສັງລວມບັນດາກິດຈະກໍາຫຼັກທີ່ໄດ້ຈັດຕັ້ງປະຕິບັດ** |
|---|
| **<u>ຜົນສໍາເລັດ:</u>**<br>1. ມີເງິນໝູນວຽນ 16 ລ້ານປາຍກ່ວາກີບ<br>2. ເງິນແຮສຸກເສີນ 2-3 ລ້ານກີບ<br>3. ສາມາດໃຫ້ຄໍາປຶກສາແກ່ຄົນເຈັບຂົງເຂດສຸກສາລາປົກຄຸມໄດ້ດີສົມຄວນ |
| **<u>ຂໍ້ຫຍຸ້ງຍາກ:</u>**<br>1. ບໍ່ມີກັບໃສ່ຂີ້ກະເທີ່ ຍ້ອນວ່າພະນັກງານສຸກສາລາ ບໍ່ໄດ້ພົວພັນເອົານໍາເມືອງ ແລະ ກໍ່ບໍ່ຄ່ອຍມີຄົນເຈັບມາກວດ<br>2. ຄົນເຈັບ TB 1 ຄົນ ຊື່ ທ້າວ ອາເພາະ ອາຍຸ 41ປີ ບ້ານປ່າຄາ ເມືອງສິງ ຊົນເຜົ່າອາຄາ ບໍ່ຍອມມາຕໍ່ຢາ, ແນະນໍາແລ້ວແຕ່ບໍ່ມາກວດຄືນໃໝ່ |
| **<u>ຂໍ້ແນະນໍາ:</u>**<br>3. ໃຫ້ສືບຕໍ່ ແລະ ກະຈາຍວຽກຊອກຄົ້ນໃຫ້ສຸກສາລາແຕ່ລະສຸກສາລາໃຫ້ມີສ່ວນຮ່ວມ<br>4. ໃຫ້ເມືອງຊ່ວຍງົບປະມານໃນການກິດຈະກໍາສິ່ງຕ່ໍອ່າງ, ແລະ ໃຫ້ເສື່ອມສານກັບພະຍາດອື່ນ |
| **<u>ຂໍ້ສະເໜີ:</u>**<br>2. ໃຫ້ເອົາໃຈໃສ່ທີ່ສຸດກ່ຽວກັບການປະຕິບັດ DOT ເພາະຖ້າເຮັດບໍ່ໄດ້ ຈະມີຜົນສະທ້ອນສູງຈະພາໃຫ້ເປັນວັນນະໂລກດື້ຕໍ່ຢາ. |

**12. ສູນປິ່ນປົວພະຍາດ ວັນນະໂລກ ທີ່ໂຮງໝໍແຂວງ**

<table>
<tr><th>ສັງລວມບັນດາກິດຈະກໍາຫຼັກທີ່ໄດ້ຈັດຕັ້ງປະຕິບັດ</th></tr>
<tr><td><u>ຜົນສໍາເລັດ:</u><br>1. ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກໍາໄປຕາມແຜນທີ່ວາງໄວ້<br>2. ໂດຍສ່ວນໃຫຍ່ບັນດາກິດຈະກໍາບັນລຸຕົວເລກຄາດໝາຍ<br>3. ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ<br>4. ໄດ້ກວດຄົນເຈັບທຸກມື້, ຄົນເຈັບສ່ວນຫຼາຍໄດ້ເຂົ້າເຖິງການປິ່ນປົວ ແລະ ໄດ້ແນະນໍາວິທີການໃຊ້ຊີວິດຢູ່ຮ່ວມກັນ<br>5. ໄດ້ມີການປະສານງານ ຮ່ວມກັບບັນດາແຂວງອ້ອມຂ້າງ ຄົນເຈັບສາມາດມາຕໍ່ຢາກິນຢູ່ສູນ<br>6. ທາງສູນ ແລະ ໂຮງໝໍໄດ້ໃຫ້ການຮ່ວມມືກັນເປັນຢ່າງດີ ສູນສາມາດຕິດໜີ້ໂຮງໝໍ ຄ່າການບໍລິການຄົນເຈັບທຸກໆໄຕມາດເກືອບ 6,000,000 ກີບ<br>7. ບາງຄັ້ງຜູ້ຮັບຜິດຊອບການເງິນແມ່ນໄດ້ເອົາເງິນສ່ວນຕົວຈ່າຍກ່ອນ</td></tr>
<tr><td><u>ຂໍ້ຫຍຸ້ງຍາກ:</u><br>1. ຕົວຢ່າງສ່ວນຂີ້ກະເທີຫຼາຍແມ່ນມາຈາກເມືອງສິງ ແລະ ເມືອງລອງ<br>2. ເຄື່ອງກວດມີ 1 ເຄື່ອງບໍ່ພຽງພໍ<br>3. ບໍ່ມີບຸກຄະລາກອນວິເຄາະປະຈໍາ<br>4. ຂາດນໍ້າຢາກວດ ມີແຕ່ເຄື່ອງກວດທີ່ໄດ້ຮັບການສະໜັບສະໜູນຈາກ ສປປ ຈີນ<br>5. ຫ້ອງມ້ຽນເຄື່ອງ Gen-Expert ບໍ່ໄດ້ມາດຕະຖານ ເພາະວ່າມີການເກັບມ້ຽນເຄື່ອງກວດຫຼາຍຊະນິດ ແລະ ບໍ່ສະອາດ<br>6. ໄດ້ຮັບເງິນທຸກໆທ້າຍໄຕມາດ ເປັນສາເຫດບໍ່ສະດວກໃນການປະຕິບັດວຽກງານ<br>7. ໄດ້ຕິດໜີ້ໂຮງໝໍ ຄ່າການບໍລິການຄົນເຈັບທຸກໆໄຕມາດເກືອບ 6,000,000ກີບ<br>8. ບາງຄັ້ງຜູ້ຮັບຜິດຊອບການເງິນແມ່ນໄດ້ເອົາເງິນສ່ວນຕົວຈ່າຍກ່ອນ<br>9. ບໍ່ມີຫ້ອງສະເພາະໃຫ້ຄໍາປຶກສາແກ່ຄົນເຈັບ<br>10. ຫ້ອງເກັບມ້ຽນຢາ ບໍ່ມີແອ ເຊິ່ງຈະເປັສາເຫດໃຫ້ຢາເຊື່ອມຄຸນນະພາບໄວ<br>11. ບໍ່ມີຫ້ອງນອນຄົນເຈັບ TB ສະເພາະ</td></tr>
<tr><td><u>ຂໍ້ແນະນໍາ:</u><br>1. ຖ້າມີການນໍາໃຊ້ເງິນຮ່ວງອື່ນໆກ່ອນ ແມ່ນໃຫ້ມີເອກະສານຢັ້ງຢືນດ້ານການເງິນ ເພື່ອເປັນບ່ອນອ້າງອີງໃນການໄຊ້ແທນຄືນ</td></tr>
<tr><td><u>ຂໍ້ສະເໜີ:</u> ສະເໜີຂໍທຶນການຊ່ວຍເຫຼືອ<br>1. ເພື່ອປູພື້ນທາງຢ່າງລະຫວ່າງຕຶກຕໍ່ຕຶກ<br>2. ເພື່ອສ້າງເຮືອນຄົວຄົນເຈັບ<br>3. ເພື່ອຊື້ແອຕິດຕັ້ງ ຫ້ອງສາງເກັບມ້ຽນຢາ<br>4. ເພື່ອຕິດແຫວ່ນແກ້ວໃສ່ຝາ ຫ້ອງຕ້ອນຮັບຄົນເຈັບ<br>5. ເພື່ອຊື້ກົງເຕີນໍ້າ ແລະ ໄຟຟ້າຕ່າງຫາກ ເພາະດຽວນີ້ແມ່ນຊົມໃຊ້ຮ່ວມກັບຂອງໂຮງໝໍ<br>6. ເພື່ອສ້າງກັນສາດດ້ານໜ້າຂອງຕຶກ ARV<br>7. ເພື່ອສ້າງຫ້ອງສະເພາະບໍລິການໃຫ້ຄໍາປຶກສາແກ່ຄົນເຈັບ<br>8. ເພື່ອຂະຫຍາຍສູນ ARV ໄປເມືອງນາແລ<br>ໝາຍເຫດ: ຂໍ້ເໜີນີ້ ແມ່ນໄດ້ສະເໜີຄືກັນກັບຂະແໜງເອດ</td></tr>
</table>

**13. ສຸກສາລານາເຕີຍ**

| ສັງລວມບັນດາກິດຈະກໍາຫຼັກທີ່ໄດ້ຈັດຕັ້ງປະຕິບັດ |
|---|
| **ຜົນສໍາເລັດ:**<br>1. ສາມາດໃຫ້ຄໍາປຶກສາແກ່ຄົນເຈັບຂົງເຂດສຸກສາລາປົກຄຸມໄດ້ດີສົມຄວນ<br>2. ສາມາດຕິດຕາມຄົນເຈັບໄດ້ຫຼາຍບ້ານທີ່ຂຶ້ນກັບສຸກສາລາປົກຄຸມ<br>3. ສາມາດຊອກຄົ້ນຄົນເຈັບທີ່ເປັນວັນນະໂລກໃໝ່ເພີ່ມຂຶ້ນຫຼາຍ |
| **ຂໍ້ຫຍຸ້ງຍາກ:**<br>1. ປະຕິບັດກິດຈະກໍາວັນນະໂລກໄດ້ດີສົມຄວນໄດ້ສົ່ງຄົນເຈັບໄປກວດ ຈໍານວນ 19 ຄົນ ພົບເຊື້ອ 4 ອັດຕາ ພົບເຊື້ອ 19% ແຕ່ຍັງບໍ່ກວ້າງໄກ ຍ້ອນພະນັກງານຂັ້ນສຸກສາລາເຄື່ອນໄຫວໄດ້ດີຢູ່ແຕ່ໃກ້ ເຂດສຸກສາລາເທົ່ານັ້ນຍັງບໍ່ທັນເອົາວຽກນີ້ໄປທົ່ວບ້ານ ປົກຄຸມ<br>2. ການບັນທຶກກໍລະນີສົງໃສສົ່ງຕົວຢ່າງໄປກວດບໍ່ລະອຽດ ບໍ່ມີບ່ອນຢູ່ ຍ້ອນຫລາຍວຽກ ແລະ ຖືເບົາ<br>3. ບໍ່ມີກັບໃສ່ກະເທີ່ ຍ້ອນວ່າເມືອງຫລືແຂວງບໍ່ສົ່ງໃຫ້<br>4. ການສຸຂະສຶກສາກໍມີບັນຫາຄືກັບບ່ອນອື່ນ ຍ້ອນບໍ່ມີການເສື່ອມສານ ເຮັດພໍໃຜພໍລາວ<br>5. ການຕິດຕາມແລະຄຸ້ມຄອງຄົນເຈັບຍັງບໍ່ທັນໄດ້ໂດຍສະເພາະ ການກໍາກັບການກິນຢາຄົນເຈັບປະຈໍາວັນ ຍ້ອນບໍ່ເຫັນຄວາມສໍາຄັນ, ຂາດສິ່ງຈູງໃຈ.<br>6. ບໍ່ມີເງິນລົງຊຸກຍູ້ຕິດຕາມບ້ານ ແລະ ຄົນເຈັບ<br>7. ກວດກໍລະນີສົງໄສ 21ຄົນ ພົບເຊື້ອ 4ຄົນ<br>8. ເດືອນ 3ປີ 2016 ບໍ່ໄດ້ກວດເພາະວ່າບໍ່ມີເຈ້ຍຈຸ່ມ<br>9. ການເຮັດ DOT ບໍ່ໄດ້ມາດຕະຖານເພາະວ່າ ສຸກສາລາໄດ້ຈ່າຍຢາໃຫ້ຄົນເຈັບ 1 ເດືອນລ່ວງໜ້າ<br>10. ບໍ່ມີງົບປະມານຊື້ເຄື່ອງໃຊ້ຫ້ອງການ |
| **ຂໍ້ແນະນໍາ:**<br>1. ໃຫ້ສືບຕໍ່ ແລະ ກະຈາຍວຽກຊອກຄົ້ນໃຫ້ທົ່ວເຖິງເຂດສຸກສາລາປົກຄຸມ<br>2. ໃຫ້ດໍາເນີນກິດຈະກໍາສົ່ງຕົວຢ່າງ, ແລະ ໃຫ້ເສື່ອມສານກັບພະຍາດອື່ນ |
| **ຂໍ້ສະເໜີ:**<br>1. ຂໍໂກຕາພະນັກງານແພດ<br>2. ຂໍຕຶກນອນຄົນເຈັບວັນນະໂລກ ໃຫ້ 2 ເມືອງ<br>3. ຂໍເພີ້ມງົບປະມານສຸຂະສຶກສາ,ອົບຮົມ ອສບ<br>4. ຂໍເຄື່ອງສາຍ LCD Projector ເວລາລົງໂຄສະນາສຸຂະສຶກສາແກ່ຊຸມຊົນ<br>5. ຂໍຈັກໂຟໂຕກອບປີ (Photocopy Machine) |

## ສະຫຼຸບຫຍໍ້ການຕີລາຄາປະເມີນຜົນລວມຂອງການຕິດຕາມຊຸກຍູ້ວຽກງານຕ້ານເອດວັນນະໂລກ ແລະ ໄຂ້ຍຸງ ຢູ່ແຂວງຫຼວງນໍ້າທາມີຈຸດດີ ແລະ ຈຸດອ່ອນດັ່ງນີ້:

**1. ຜົນສຳເລັດ**

1. ພາຍໃຕ້ການຊີ້ນຳນຳພາຂອງຄະນະນຳຂັ້ນເທິງ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ.
2. ທີມງານແຕ່ລະຂັ້ນໄດ້ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.
3. ມີງົບປະມານໃນການຈັດຕັ້ງປະຕິບັດວຽກງານ (ໄດ້ຮັບການສະໜັບສະໜູນຈາກລັດຖະບານ ແລະ ສາກົນ)
4. ອຳນາດການປົກຄອງທ້ອງຖິ່ນໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ.
5. ຄົນເຈັບໄດ້ເຂົ້າເຖິງການປິ່ນປົວ ARV ຫລຸດຜ່ອນອັດຕາການແຜ່ເຊື້ອ ແລະ ການຕາຍ
6. ການຕິດຕາມເຮັດກິດຈະກຳຕ່າງໆເຊັ່ນ: ໂຄສະນາເຜີຍແຜ່ສຸຂະສຶກສາ ໄດ້ຂະຫຍາຍຕົວຢ່າງກ້ວາງຂວາງ
7. ມີຕາໜ່າງຄວບຄູມໄຂ້ຍຸງທົ່ວເຖິງທຸກເຂດ, ທຸກບ້ານ ເປົ້າໝາຍ ແລະ ກໍ່ໄດ້ຮັບການຝຶກອົບຮົມຢ່າງຕໍ່ເນື່ອງ
8. ໄດ້ຮັບການຊ່ວຍເຫຼືອດ້ານງົບປະມານ ແລະ ວັດຖຸອຸປະກອນຈາກໂຄງການກອງທຶນໂລກ, ADB CDCII ແລະ ງົບປະມານລັດບ້ວງເງິນສິ່ງເສີມແຊກຄຸມ.
9. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານຂອງພະນັກງານວິຊາການແຕ່ລະຂັ້ນ, ຕະຫຼອດຮອດ ອສບ ໃນແຕ່ລະບ້ານເປົ້າໝາຍ.
10. ມີລະບົບເຝົ້າລະວັງພະຍາດໄຂ້ຍຸງຢູ່ໃນແຂວງ.
11. ມີອຸປະກອນທີ່ສາມາດບົ່ງມະຕິໄດ້ໄວສະພາບການເຈັບເປັນຍ້ອນໄຂ້ຍຸງທີ່ເກີດຂຶ້ນ.
12. ມຸ້ງສາມາດແຈກຢາຍທົ່ວເຖິງບ້ານເປົ້າໝາຍ
13. ອັດຕາການເຈັບເປັນຍ້ອນພະຍາດໄຂ້ຍຸງໄດ້ລຸດລົງ
14. ໂດຍລວມໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳໄປຕາມແຜນທີ່ວາງໄວ້
15. ອັດຕາການຄົ້ນພົບຄົນເຈັບວັນນະໂລກໄດ້ເພີ້ມຂຶ້ນຫຼາຍກ່ວາເກົ່າ
16. ໄດ້ສົ່ງບົດລາຍງານຕາມປົກກະຕິ
17. ໂດຍສ່ວນໃຫຍ່ບັນດາກິດຈະກຳບັນລຸຕົວເລກຄາດໝາຍ
18. ຮັບປະກັນໄດ້ວ່າບໍ່ມີຢາປົວພະຍາດຂາດສາງ
19. ພະນັກງານສຸກສາລານໍ້າດ້າຍແມ່ນໄດ້ ມີການອົບຮົມວິຊາສະເພາະໃຫ້ກັນພາຍຫຼັງທີ່ໄດ້ຮັບການອົບຮົມມາ ແລະ ພະນັກງານໄດ້ຮູ້ຈັກເຮັດໜ້າທີ່ແທນກັນໄດ້

2. **ຂໍ້ຫຍຸ້ງຍາກ**

**ຂັ້ນແຂວງ**

1. ການຕິດຕໍ່ປະສານງານຂັ້ນແຂວງ ແລະ ເມືອງຍັງບໍ່ສະດວກເທົ່າທີ່ຄວນ
2. ອັດຕາການຄົນເຈັບວັນນະໂລກເພີ້ມຂຶ້ນສູງແລະຍັງມີຄົນເຈັບວັນນະ ໂລກທີ່ພົບເຊື້ອດື້ຕໍ່ຢາ ແລະ ຄົນເຈັບສ່ວນໃຫຍ່ແມ່ນບໍ່ໃຫ້ການຮ່ວມມື
3. ກິດຈະກຳຂະແໜງເອດ ສາມາດຂະຫຍາຍຮອດແຕ່ຂັ້ນເມືອງເທົ່ານັ້ນ, ຍັງບໍ່ທັນໄດ້ຂະຫຍາຍຮອດຂັ້ນສຸກສາລາເທື່ອ
4. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈຳກັດ ແລະ ບໍ່ໄດ້ເຂົ້າເຖິງເຂດຫ່າງໄກສອກຫຼີກ.
5. ການໂອນເງິນຈາກຂັ້ນແຂວງຫາເມືອງ ຍັງຊັກຊ້າເພາະວ່າເມືອງບໍ່ໄດ້ສົ່ງບົດລາຍງານກິດຈະກຳຕາມກຳນົດເວລາ ແລະ ກິດຈະກຳຫຼັກບໍ່ໄດ້ປະຕິບັດ ແມ່ນກິດຈະກຳການນຳສົ່ງຕົວຢ່າງ
6. ຂາດພະນັກງານເປັນຕົ້ນແມ່ນ ພະນັກງານວັນນະໂລກ ແລະ ພະນັກງານວິເຄາະຢູ່ໂຮງໝໍແຂວງ
7. ການໂອນເງິນແຕ່ສູນກາງ ຫາ ແຂວງແມ່ນຍັງຊັກຊ້າ

**ຫ້ອງການສາທາເມືອງນ້ຳທາ**

1. ການຕິດຕໍ່ປະສານງານລະຫວ່າງພະແນກສາທາລະນະສຸກ ເມືອງ ແລະ ແຂວງ ຍັງບໍ່ສະດວກແລະຕໍ່ເນື່ອງ
2. ງົບປະມານຊັກຊ້າ ແລະ ບໍ່ມີເງິນລົງຕິດຕາມສຸກສາລາ
3. ບໍລິການໃຫ້ຄໍາປຶກສາ (ບໍ່ມີສູນປິ່ນປົວ)
4. ບໍ່ໄດ້ເຮັດພາລະບົດບາດຂອງໂຮງໝໍ
5. ບໍ່ມີການອົບຮົມ

**ສຸກສາລາຈະເລີນສຸກ**

1. ການເຮັດ DOT ບໍ່ໄດ້ປະຕິບັດຕາມລະບຽບການ (ເອົາຢາໃຫ້ຄົນເຈັບໄປກິນເອງ)
2. ບໍ່ໄດ້ຮັບເງິນບໍາລຸ້ງມຸ້ງ ແລະ ບໍ່ມີອັດຕາກິນເວລາແຈກຢາຍມຸ້ງ (GF) ແຕ່ໄດ້ຈາກບ້ອງເງິນສົ່ງເສີມ
3. ປີ 2016 ຍັງບໍ່ທັນໄດ້ຮັບເຈ້ຍຈຸ່ມແລະຢາກິນດີໄຂ້ຍຸງ
4. ຫຍຸ້ງຍາກໃນການສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸ ແລະ ອາຄາ
5. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈໍາກັດ ແລະ ບໍ່ພຽງພໍ

**ຫ້ອງການສາທາລະນະສຸກເມືອງສິງ**

1. ການບໍລິການສ່ວນຫຼາຍແມ່ນຄົນເຈັບມາຈາກເມືອງລອງ
2. ເຈ້ຍຈຸ່ມສ່ວນຫຼາຍມອບໃຫ້ໂຮງໝໍ ນໍາໃຊ້
3. ພະຍາດໄຂ້ຍຸງສ່ວນຫຼາຍໄດ້ຕິດມາຈາກເຂດຊາຍແດນຕິດກັບພະມ້າເຊັ່ນ: ເມືອງລອງ, ເມືອງຫຼາ ເພາະປະຊາຊົນເຂດນັ້ນເຮັດສວນຢາງພາລາຫຼາຍ
4. ຄົນເຈັບ TB ສ່ວນຫຼາຍແມ່ນຊົນເຜົ່າອາຄາ
5. ສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸແລະອາຄາ
6. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈໍາກັດ ແລະ ບໍ່ພຽງພໍ

**ສຸກສາລານ້ຳດ້າຍ**

1. ຄົນເຈັບ TB 13 ຄົນທີ່ມາກິນຢານ□າສຸກສາລາ ສ່ວນຫຼາຍແມ່ນຊົນເຜົ່າອາຄາ
2. ການເຮັດ DOT ບໍ່ໄດ້ປະຕິບັດຕາມລະບຽບການ (ເອົາຢາໃຫ້ຄົນເຈັບໄປກິນເອງ)
3. ບໍ່ໄດ້ກວດຄົນໃກ້ສິດທີ່ເປັນ TB
4. ບໍ່ມີງົບປະມານຢ້ຽມຢາມບ້ານ (ເມືອງລົງຢ້ຽມຢາມເອງ)
5. ເວລາໄປເກັບຂໍ້ມູນແມ່ນອາໄສໃນເວລາໄປວຽກອື່ນ
6. ບໍ່ໄດ້ລາຍງານໃຫ້ເມືອງປົກກະຕິຫຍຸ້ງຍາກໃນການສື່ສານດ້ານພາສາ ເພາະສ່ວນຫຼາຍແມ່ນເຜົ່າຂະມຸ ແລະ ອາຄາ
7. ງົບປະມານເຂົ້າໃນການເຄື່ອນໄຫວວຽກງານກໍ່ຍັງມີຈໍາກັດ ແລະ ບໍ່ພຽງພໍ

**ສຸກສາລາພູດອນທັນ**

1. ບໍ່ມີກັບໃສ່ຂີ້ກະເທີ່ ຍ້ອນວ່າພະນັກງານສຸກສາລາ ບໍ່ໄດ້ພົວພັນເອົານໍາເມືອງ ແລະ ກໍ່ບໍ່ຄ່ອຍມີຄົນເຈັບມາກວດ
2. ຄົນເຈັບ TB 1 ຄົນ ຊື່ ທ້າວ ອາເພາະ ອາຍຸ 41ປີ ບ້ານປ່າຄາ ເມືອງສິງ ຊົນເຜົ່າອາຄາ ບໍ່ຍອມມາຕໍ່ຢາ, ແນະນໍາແລ້ວແຕ່ບໍ່ມາກວດຄືນໃໝ່

**ສູນປິ່ນປົວພະຍາດ AIDS ແລະ TB ໂຮງໝໍແຂວງ**

1. ຕົວຢ່າງສ່ວນຂີ້ກະເທີຫຼາຍແມ່ນມາຈາກເມືອງສິງແລະ ເມືອງລອງ
2. ເຄື່ອງກວດມີ 1 ເຄື່ອງບໍ່ພຽງພໍ
3. ບໍ່ມີບຸກຄະລາກອນວິເຄາະປະຈໍາ

4. ຂາດນ້ຳຢາກວດ ມີແຕ່ເຄື່ອງກວດທີ່ໄດ້ຮັບການສະໜັບສະໜູນຈາກ ສປປ ຈີນ
5. ຫ້ອງມ້ຽນເຄື່ອງ Gen-Expert ບໍ່ໄດ້ມາດຕະຖານ ເພາະວ່າມີການເກັບມ້ຽນເຄື່ອງກວດຫຼາຍຊະນິດ ແລະ ບໍ່ສະອາດ

**ສູນປິ່ນປົວພະຍາດ AIDS ແລະ TB ໂຮງໝໍແຂວງ (ຕໍ່)**

1. ໄດ້ຮັບເງິນທຸກໆທ້າຍໄຕມາດ ເປັນສາເຫດບໍ່ສະດວກໃນການປະຕິບັດວຽກງານ
2. ໄດ້ຕິດໜີ້ໂຮງໝໍ ຄ່າການບໍລິການຄົນເຈັບທຸກໆໄຕມາດເກືອບ 6,000,000ກີບ
3. ບາງຄັ້ງຜູ້ຮັບຜິດຊອບການເງິນແມ່ນໄດ້ເອົາເງິນສ່ວນຕົວຈ່າຍກ່ອນ
4. ບໍ່ມີຫ້ອງສະເພາະໃຫ້ຄຳປຶກສາແກ່ຄົນເຈັບ
5. ຫ້ອງເກັບມ້ຽນຢາ ບໍ່ມີແອ ເຊິ່ງຈະເປັນສາເຫດໃຫ້ຢາເຊື່ອມຄຸນນະພາບໄວ
6. ບໍ່ມີຫ້ອງນອນຄົນເຈັບ TB ສະເພາະ

**ສະຖານີໄຊ້ຍຸງ**

1. ບໍ່ມີເງິນລົງຊຸກຍູ້ຕິດຕາມ

**ສຸກສາລານາເຕີຍ**

1. ບໍ່ມີເງິນລົງຊຸກຍູ້ຕິດຕາມບ້ານ ແລະ ຄົນເຈັບ
2. ກວດກໍລະນີສົງໄສ 21ຄົນ ພົບເຊື້ອ 4ຄົນ
3. ເດືອນ 3ປີ 2016 ບໍ່ໄດ້ກວດເພາະວ່າບໍ່ມີເຈ້ຍຈຸ່ມ
4. ການເຮັດ DOT ບໍ່ໄດ້ມາດຕະຖານເພາະວ່າ ສຸກສາລາໄດ້ຈ່າຍຢາໃຫ້ຄົນເຈັບ 1 ເດືອນລ່ວງໜ້າ
5. ບໍ່ມີງົບປະມານຊື້ເຄື່ອງໃຊ້ຫ້ອງການ

**ຂໍ້ແນະນຳ**

1. ໃຫ້ປະກອບພະນັກງານໃຫ້ເໝາະສົມ ຕາມກິດຈະກຳຂອງແຕ່ລະໂຄງການ
2. ສ້າງແຜນງົບປະມານເພື່ອຂໍທຶນບ້ວງແຊກຄຸມສິ່ງເສີມເຂົ້າໃນ 3 ໂຄງການ

| ຮູບທີມງານຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານ |
| --- |

## ໂຮງໝໍແຂວງຫຼວງນ້ຳທາ



## ຫ້ອງການສາທາລະນະສຸກເມືອງນ້ຳທາ




## ສຸກສາລາຈະເລີນສຸກ



**ຫ້ອງການສາທາລະນະສຸກເມືອງສິງ**



**ສຸກສາລານ້ຳດ້າຍ**



**ສຸກສາລາພູດອນທັນ**



### ສູນປິ່ນປົວພະຍາດເອດ ແລະ ວັນນະໂລກ ທີ່ໂຮງໝໍແຂວງ



### ສະຖານີໄຂ້ຍຸງແຂວງຫຼວງນ້ຳທາ



### ສຸກສາລານາເຕີຍ



**ພະແນກສາທາລະນາສຸກ ແຂວງຫຼວງນໍ້າທາ**



**ຂອບໃຈ:**

ທີມງານຕິດຕາມວຽກງານ ຂອງຄະນະກຳມະການປະສານງານກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຂໍສະແດງຄວາມຂອບໃຈ ຄະນະຊີ້ນຳຂອງພະແນກສາທາລະນະສຸກແຂວງຫຼວງນໍ້າທາ, ສູນປິ່ນປົວພະຍາດເອດ ແລະ ວັນນະໂລກ ໂຮງໝໍແຂວງ, ສະຖານີໄຂ້ຍຸງ, ຫ້ອງການສາທາລະນະສຸກເມືອງນໍ້າທາ ແລະ ເມືອງສິງ, ສຸກສາລາຈະເລີນສຸກ, ນໍ້າດ້າຍ, ພູດອນທັນ ແລະ ສຸກສາລານາເຕີຍ ພ້ອມດ້ວຍພະນັກງານທຸກໆທ່ານທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຕ້ອນຮັບ ແລະ ຮ່ວມມືເປັນຢ່າງດີ ເຮັດໃຫ້ການລົງຕິດຕາມຄັ້ງນີ້ ໄດ້ປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.

ນະຄອນຫຼວງວຽງຈັນ, ວັນທີ 0 5 AUG 2016

<u>ຫົວໜ້າທີມງານລົງຕິດຕາມວຽກງານ</u>

ທ່ານ ດຣ. ພິໄລສັກ ນະໄພວົງ
ປະທານ ຄະນະກຳມະການກວດກາ

<u>ຜູ້ສະຫລຸບສັງລວມ</u>

ທ່ານ ບຸດສາລີ ລັດຕະນະ
ຜູ້ຊ່ວຍປະສານງານ/ບັນຊີ